ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ເລກທີ 96/ຈຂ.ຈສ
ແຂວງຈຳປາສັກ, ວັນທີ .09... ຕຸລາ 2017

# ຂໍ້ຕົກລົງ
## ວ່າດ້ວຍການຄຸ້ມຄອງ ແລະ ຈັດສັນ
## ຄວາມເປັນລະບຽບຮຽບຮ້ອຍ ໃນຕົວເມືອງປາກເຊ ແຂວງຈຳປາສັກ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ມະຕິຕົກລົງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ I ສະບັບເລກທີ 31/ສພຂ.ຈສ, ລົງວັນທີ 28 ກໍລະກົດ 2017;
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາປະຊາຊົນແຂວງຈຳປາສັກ ສະບັບເລກທີ 133/ສພຂ.ຈສ, ລົງວັນທີ 12 ກັນຍາ 2017;

**ເຈົ້າແຂວງງຈຳປາສັກ ອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆ ໃນການຄຸ້ມຄອງ - ຈັດສັນ ຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງປາກເຊ ແຂວງຈຳປາສັກ ແນໃສ່ເຮັດໃຫ້ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍສະດວກ, ປອດໄພ, ມີສະພາບແວດລ້ອມທີ່ດີ ແລະຈົບງາມ ເພື່ອຍົກລະດັບຕົວເມືອງໃຫຍ່ ຂອງແຂວງ ໃຫ້ສາມາດຮັບຮອງເປັນນະຄອນໃນອະນາຄົດ.

**ມາດຕາ 2. ການຄຸ້ມຄອງ - ຈັດສັນຄວາມເປັນລະບຽບຮຽບຮ້ອຍ**

ການຄຸ້ມຄອງຄວາມເປັນລະບຽບຮຽບຮ້ອຍ ແມ່ນການຕິດຕາມກວດກາ ການຈັດຕັ້ງປະຕິບັດນິຕິກຳ ກ່ຽວກັບການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃຫ້ມີຄວາມຖືກຕ້ອງ ແລະ ເຂັ້ມງວດ.

ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ແມ່ນຂະບວນການຈັດວາງລະບຽບທາງສັງຄົມ ເພື່ອຄວບຄຸມພຶດຕິກຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ຢູ່ໃນລະບຽບຫຼັກການທີ່ກຳນົດໄວ້ ເຊັ່ນ: ການກຳນົດລະບຽບການ ກ່ຽວກັບການນຳໃຊ້ທີ່ດິນ, ສິ່ງປຸກສ້າງ, ລະບົບໂຄງລ່າງເຕັກນິກ, ການສັນຈອນ ໄປ-ມາ, ການນຳໃຊ້ລົດ, ໃຊ້ຖະໜົນ, ການບໍລິການຂົນສົ່ງສິນຄ້າ-ໂດຍສານ, ການປົກປັກຮັກສາ ແລະ ອະນາໄມສິ່ງແວດລ້ອມ, ການປະກອບອາຊີບຄ້າຂາຍ ລວມທັງການວາງເຄື່ອງຂາຍ ຢູ່ແຄມເສັ້ນທາງ ແລະອື່ນໆ ເພື່ອແນໃສ່ເຮັດໃຫ້ສັງຄົມ ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສະອາດຈົບງາມ.

**ມາດຕາ 3. ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຕົວເມືອງ** ໝາຍເຖິງ ບໍລິເວນໃຈກາງເຂດເສດຖະກິດ, ສັງຄົມ ແລະ ການປົກຄອງຂອງເມືອງ ທີ່ເປັນໃຈກາງ, ກວມເອົາຈຳນວນບ້ານ, ມີຂອບເຂດຊາຍແດນ ຕາມການກຳນົດວາງແຜນຄຸ້ມຄອງ ຂອງແຜນຜັງຊີ້ນຳລວມຕົວເມືອງ ສຳລັບເມືອງດຽວ;

2. **ການນຳໃຊ້ທີ່ດິນ** ໝາຍເຖິງ ຮູບແບບຂອງຕອນດິນ, ວິທີການ, ການອະນຸຍາດໃຫ້ປຸກສ້າງໃນດິນຕອນນັ້ນຕາມລະບຽບການ;

3. **ສິ່ງປະກອບຕິດຕັ້ງ** ໝາຍເຖິງ ສິ່ງປຸກສ້າງປະເພດໂຄງ, ເສົາ ແລະອື່ນໆ ທີ່ເປັນອົງປະກອບຂອງອາຄານ, ເຮືອນ;

4. **ໂຄງລ່າງເຕັກນິກ** ໝາຍເຖິງ ລະບົບໂຄງລ່າງພື້ນຖານ ຂອງຕົວເມືອງທີ່ມີໂຄງສ້າງເປັນລະບົບ, ຂະໜາດໃຫຍ່;

5. **ສິ່ງລົບກວນລຳຄານ** ໝາຍເຖິງ ຄວາມເປິະເປື້ອນ, ສຽງເນືອງນັນ, ສະພາບ, ບັນຍາກາດທີ່ບໍ່ຈົບງາມ ທີ່ພາໃຫ້ຂັດສາຍຕາ ແລະ ຄວາມຮູ້ສຶກ;

6. **ສິ່ງອຳນວຍຄວາມສະດວກ** ໝາຍເຖິງ ບັນດາອຸປະກອນເຄື່ອງຕິດຕັ້ງ ຊຶ່ງຕິດພັນກັບໂຄງສ້າງພື້ນຖານໂຄງລ່າງຂະໜາດໃຫຍ່;

7. **ເຄື່ອງໝາຍ, ສັນຍາລັກຕົວເມືອງ** ໝາຍເຖິງ ວົງວຽນ, ນໍ້າພຸ, ຫຸ່ນປັ້ນຫຼໍ່, ຮູບກໍ່ສ້າງຈຳລອງ, ປ້າຍໃຫຍ່, ປະຕູເຂົ້າເມືອງ ຢູ່ຕາມສະຖານທີ່ ເສັ້ນທາງ ແລະ ເຂດສາທາລະນະ;

8. **ເລນສັນຈອນ** ໝາຍເຖິງ ບ່ອນແບ່ງເຂດແດນ, ເລນແລ່ນລົດ ທີ່ມີຂີດໝາຍເສັ້ນສັນຈອນແຕ້ມສີຂາວ;

9. **ມຸມມອງເຫັນ** ໝາຍເຖິງ ບ່ອນແຈທາງແຍກຕ່າງໆ ຊຶ່ງເວລາຂັບຂີ່ກ່ອນລ້ຽວລົດ ໃຫ້ມອງເຫັນທັດສະນະວິໄສຢູ່ທາງໜ້າ, ທາງຂ້າງ ກ່ອນໄປເຖິງ;

10. **ນໍ້າເສຍ** ໝາຍເຖິງ ນໍ້າທີ່ເປິະເປື້ອນ ຈາກການຊັກລ້າງ, ຈາກຄົວເຮືອນ, ສະຖານທີ່ ແລະ ອື່ນໆ, ຈາກການຖ່າຍເທສິ່ງເສດເຫຼືອ ຂອງຄົນ ແລະສັດ;

11. **ສິ່ງປະກອບຕ່າງໆ** ໝາຍເຖິງ ສິ່ງກໍ່ສ້າງ, ຕິດຕັ້ງ ຂະໜາດກາງ ຫາຂະໜາດນ້ອຍ ທັງເປັນຂອງສ່ວນລວມ ແລະ ສ່ວນບຸກຄົນ, ແບບເປັນລະບົບ ແລະ ບໍ່ເປັນລະບົບ ປະກອບສ້າງຂຶ້ນໃນເຂດແຄມທາງ ແລະ ສະຖານທີ່ສາທາລະນະທົ່ວໄປ.

**ມາດຕາ 4. ຫຼັກການເຄື່ອນໄຫວ**

ການຄຸ້ມຄອງ - ຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຕົວເມືອງປາກເຊ ຂອງແຂວງຈຳປາສັກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງ ກັບແຜນພັດທະນາເສດຖະກິດ - ສັງຄົມ ແຫ່ງຊາດ ກໍຄືແຜນພັດທະນາເສດຖະກິດ - ສັງຄົມ ແຜນຍຸດທະສາດຂອງແຂວງ ແລະ ແຜນດຳເນີນງານການຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງປາກເຊ ແຂວງຈຳປາສັກ;

2. ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພ, ຄວາມສະດວກ, ສອດຄ່ອງ, ຕໍ່ເນື່ອງ, ມີປະສິດທິຜົນດ້ວຍຄວາມຮັບຜິດຊອບ ແລະ ການມີສ່ວນຮ່ວມ ຂອງບຸກຄົນ ແລະ ການຈັດຕັ້ງໃນທົ່ວສັງຄົມ;

3. ຮັບປະກັນຄວາມເປັນເອກະພາບ ໃນການແບ່ງການຄຸ້ມຄອງ ລະຫວ່າງ ຂະແໜງການທີ່ກ່ຽວຂ້ອງ ບົນພື້ນຖານການປະສານສົມທົບ ຢ່າງໃກ້ຊິດ;

4. ຮັບປະກັນການຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃຫ້ໄປຕາມແຜນຜັງຊີ້ນຳລວມ, ແຜນຜັງສະເພາະ ຂອງຕົວເມືອງປາກເຊ;

5. ຮັບປະກັນການນຳໃຊ້ຖະໜົນ, ພາຫະນະຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ສອດຄ່ອງກັບມາດຕະຖານເຕັກນິກ ແລະ ມີຄວາມປອດໄພ.

**ມາດຕາ 5. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ສະເພາະໃນຕົວເມືອງປາກເຊ ແຂວງຈຳປາສັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ II
## ການກຳນົດພື້ນທີ່ ຕົວເມືອງປາກເຊ ແຂວງຈຳປາສັກ

**ມາດຕາ 6. ການກຳນົດພື້ນທີ່ ຕົວເມືອງປາກເຊ**

ພື້ນທີ່ຕົວເມືອງປາກເຊ ແຂວງຈຳປາສັກ ກວມເອົາເນື້ອທີ່ປະມານ 7.772 ເຮັກຕາ, ປະກອບດ້ວຍ 37 ບ້ານ ຄື: ບ້ານ ທ່າຫຼວງ, ພະບາດ, ໂພນໄຊ, ຫຼັກເມືອງ, ປາກເຊ, ບ້ານທົ່ງ, ຮ່ອງຂະຍອມ, ສາງນ້ຳມັນ, ໂພນກຸງ, ໂພນສະຫວັນ, ທ່າຫີນເໜືອ, ຫ້ວຍປູນ, ໂພນງາມ, ທ່າໄຮ, ຄັນເກົ່າ, ແກ້ງເກົ່າ, ສະພານໄຊ, ຫ້ວຍເລົ່າ, ໂພນສີໄຄ, ດົງເກາະໂລງ, ດອນເຂາະ, ໂພນສະອາດ, ບ້ານແກ, ໂພຕາກ, ບ້ານແຫ່, ແກ້ວສຳພັນ, ໂນນດູ່, ໂຊກອຳນວຍ, ນາແຫກ, ຫ້ວຍຍາງຄຳ, ບ້ານກາງ, ພູມ່ວງ, ສວນສະຫວັນ, ສະໜາມໄຊ, ໂນນສະຫວ່າງ, ພັດທະນາ ແລະ ບ້ານຈັດສັນ.

**ມາດຕາ 7. ເຂດແດນຕິດຈອດ ຂອງຕົວເມືອງປາກເຊ**

ຕົວເມືອງປາກເຊ ມີເຂດແດນຕິດຈອດ ດັ່ງນີ້:

- ທິດເໜືອ ຕິດກັບເມືອງຊະນະສົມບູນ — ມີຄວາມຍາວ 14,3 ກມ;
- ທິດໃຕ້ ແລະ ທິດຕາເວັນອອກ ຕິດກັບເມືອງບາຈຽງຈະເລີນສຸກ — ມີຄວາມຍາວ 15 ກມ;
- ທິດຕາເວັນຕົກ ຕິດກັບແມ່ນ້ຳຂອງ — ມີຄວາມຍາວ 17,7 ກມ.

# ໝວດທີ III
## ການຄຸ້ມຄອງນຳໃຊ້ທີ່ດິນ, ການກໍ່ສ້າງ ແລະ ສິ່ງປະກອບຕິດຕັ້ງ

### ມາດຕາ 8. ການຄຸ້ມຄອງການນຳໃຊ້ທີ່ດິນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງສັງຄົມ ຕ້ອງນຳໃຊ້ເນື້ອທີ່ດິນໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍທີ່ດິນຢ່າງເຂັ້ມງວດ. ໃນກໍລະນີ ລັດຕ້ອງການພັດທະນາເນື້ອທີ່ດິນໃນຂອບເຂດສະຫງວນ ລັດຈະບໍ່ຊົດເຊີຍໃຫ້ຢ່າງເດັດຂາດ.

### ມາດຕາ 9. ການກໍ່ສ້າງ, ສ້ອມແປງ, ຕໍ່ເຕີມ ແລະ ນຳໃຊ້ອາຄານ

ທຸກການກໍ່ສ້າງ, ສ້ອມແປງ, ຕໍ່ເຕີມ ແລະ ນຳໃຊ້ອາຄານ ຫຼື ປ່ຽນແປງການນຳໃຊ້ອາຄານ ຕ້ອງໄດ້ຮັບອະນຸຍາດຈາກຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ຖ້າລະເມີດ ຈະຖືກປັບໃໝ, ຮື້ຖອນ ແລະ ບໍ່ຮັບຮູ້ການກໍ່ສ້າງນັ້ນໆ.

ຜູ້ຮັບຜິດຊອບສະຖານທີ່ການກໍ່ສ້າງ, ປຸກສ້າງ, ສ້ອມແປງ ແລະ ຕໍ່ເຕີມ ຕ້ອງມີປ້າຍເຕືອນ, ມີຮົ້ວອ້ອມ, ມີສິ່ງກັ້ງບັງ ຫຼື ຕາໜ່າງອ້ອມສະຖານທີ່ດັ່ງກ່າວ ເພື່ອບໍ່ໃຫ້ວັດສະດຸກໍ່ສ້າງ, ສິ່ງເປິະເປື້ອນ, ຂີ້ຝຸ່ນດິນ, ປິວອອກນອກ ແລະ ເພື່ອບໍ່ໃຫ້ເຫັນສະພາບທີ່ບໍ່ຈົບງາມ ຂອງສະຖານທີ່ກໍ່ສ້າງນັ້ນ.

ສຳລັບອາຄານຮ້ານອາຫານບັນເທີງ ໃຫ້ກໍ່ສ້າງ, ສ້ອມແປງ ຫ້ອງເກັບສຽງ ໃຫ້ໄດ້ມາດຕະຖານ, ການຄວບຄຸມລະດັບສຽງ ບໍ່ໃຫ້ກະທົບຕໍ່ພາຍນອກ ແລະ ເຮືອນຂ້າງຄຽງ. ພ້ອມນັ້ນໃຫ້ມີທາງເຂົ້າ ແລະ ທາງອອກສະດວກສະບາຍ, ການເກັບມ້ຽນ ແລະ ຖ່າຍເທສິ່ງເສດເຫຼືອ ຕ້ອງຮັບປະກັນບໍ່ໃຫ້ຊະຊາຍເປື້ອນເປິະ ແລະ ມີກິ່ນເໝັນ ທີ່ກະທົບຕໍ່ສະພາບແວດລ້ອມອ້ອມຂ້າງໂດຍເດັດຂາດ.

### ມາດຕາ 10. ສິ່ງປະກອບຕິດຕັ້ງຕາມແຄມທາງ ແລະ ສະຖານທີ່ຕ່າງໆຂອງຕົວເມືອງ

ກ່ອນການຕິດຕັ້ງປ້າຍໂຄສະນາ ຕ້ອງໄດ້ຮັບອະນຸຍາດຈາກຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ແລະ ອົງການພັດທະນາບໍລິຫານຕົວເມືອງ ເພື່ອກວດກາ, ຢັ້ງຢືນ ຮັບປະກັນທາງດ້ານທີ່ຕັ້ງ, ມາດຕະຖານເຕັກນິກ, ຄວາມແຂງແຮງຂອງໂຄງສ້າງ, ຂະໜາດ, ສີສັນ ແລະ ເນື້ອໃນຂອງປ້າຍ.

ການຕິດຕັ້ງແຜ່ນປ້າຍໃສ່ໜ້າອາຄານ, ຮ້ານຄ້າ, ຫ້ອງແຖວຂາຍເຄື່ອງ, ບໍລິການ, ທຸລະກິດ ຕ້ອງໃຫ້ຂະໜາດແຜ່ນປ້າຍ, ຄວາມສູງ ຢູ່ໃນຂະໜາດ, ຊັດສ່ວນ, ລະດັບຄວາມສູງ - ຕ່ຳ ທີ່ມີຄວາມກົມກືນເທົ່າທຽມກັນ.

ການຕິດຄຳຂວັນ, ທຸງຊາດ, ທຸງທິວ ຕ້ອງເບິ່ງຄວາມເໝາະສົມທາງດ້ານທີ່ຕັ້ງ ແລະ ໂຄງສ້າງແໜ້ນໜາ, ສະພາບແວດລ້ອມອ້ອມຂ້າງ ແລະ ຄວາມສວຍງາມເປັນຕົ້ນຕໍ.

ພາກສ່ວນກ່ຽວຂ້ອງຕ້ອງໄດ້ຈັດສັນ ການຕິດຕັ້ງປ້າຍໂຄສະນາ ໃນບໍລິເວນ ຫຼື ສະຖານທີ່, ຈຸດທີ່ຕັ້ງ ທີ່ເໝາະສົມ, ເປັນລະບົບລະບຽບ ເພື່ອຮັບປະກັນໃຫ້ການສື່ສານ ໂຄສະນາ ມີຄວາມສອດຄ່ອງ. ໃນກໍລະນີປ້າຍເປ່ເພ ເຈົ້າຂອງປ້າຍໂຄສະນານັ້ນ ຕ້ອງຮີບຮ້ອນສ້ອມແປງ ຫຼື ປ່ຽນຖ່າຍ ໂຄງຮ່າງປ້າຍ, ແຜ່ນປ້າຍ ໃຫ້ຢູ່ໃນສະພາບດີງາມ.

**ມາດຕາ 11. ການຕໍ່ເຕີມ, ປັບປຸງ, ສ້ອມແປງ, ປະດັບເອ້ ສິ່ງປຸກສ້າງ ໃນເຂດແຄມທາງຂອງຕົວເມືອງ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫຼື ເຈົ້າຂອງອາຄານ ທີ່ມີສຳນັກງານ, ເຮືອນ ທີ່ຢູ່ອາໄສ ລຽບຕາມແຄມທາງ ໃນຕົວເມືອງ ຕ້ອງປັບປຸງ, ສ້ອມແປງໜ້າບ້ານ, ທຸກຊິ້ນສ່ວນຂອງອາຄານ, ດ້ານໜ້າເຮືອນ, ດ້ານຂ້າງເຮືອນ ໃຫ້ມີຄວາມສະອາດ, ຈົບງາມ, ເປັນລະບຽບ, ນຳໃຊ້ວັດສະດຸ ທີ່ເໝາະສົມ, ກົມກືນ ລວມທັງຮົ້ວບ້ານ, ກຳແພງ ປະຕູທາງເຂົ້າ - ອອກ, ໃຫ້ມີການປູກຫຍ້າ, ປູກດອກໄມ້ ແລະ ຕັ້ງໂຖດອກໄມ້ປະດັບ ໃຫ້ມີຄວາມຈົບງາມ.

## ໝວດທີ IV
## ການຄຸ້ມຄອງລະບົບໂຄງລ່າງເຕັກນິກ ແລະ ເຄື່ອງໝາຍຕົວເມືອງ

**ມາດຕາ 12. ການຄຸ້ມຄອງໂຄງລ່າງເຕັກນິກສາທາລະນະຕົວເມືອງ**

ການຄຸ້ມຄອງໂຄງລ່າງເຕັກນິກສາທາລະນະຕົວເມືອງ ໃຫ້ປະຕິບັດ ດັ່ງນີ້:

1. ລະບົບຕາໜ່າງເສັ້ນທາງຫຼວງແຫ່ງຊາດ (ຜ່ານຕົວເມືອງ), ທາງສາຍເອກ, ສາຍຫລັກ, ສາຍເຊື່ອມ ແລະ ທາງຊອຍໃນຕົວເມືອງ, ຂອບເຂດຂອງທາງ ແລະ ເສັ້ນແຖວການປຸກສ້າງ ຢູ່ໃນເຂດຕົວເມືອງທີ່ມີການອອກແບບຜັງເມືອງແລ້ວ ແມ່ນໃຫ້ປະຕິບັດຕາມການກຳນົດຂອງແຜນຜັງເມືອງ, ນອກຈາກເຂດຜັງເມືອງກຳນົດ ແມ່ນປະຕິບັດຕາມກົດໝາຍທາງຫຼວງ;

2. ລະບົບທີ່ດິນ, ອາຄານ, ຄວາມໜາແໜ້ນການຢູ່ອາໄສ ແລະ ຄວາມສູງຂອງອາຄານ ແມ່ນເງື່ອນໄຂທາງດ້ານເຕັກນິກຜັງເມືອງ ເພື່ອໃຊ້ຄວບຄຸມໃຫ້ການປຸກສ້າງ ແລະ ນຳໃຊ້ທີ່ດິນເປັນລະບົບ, ຖືກຕ້ອງ, ພຽງພໍ, ເກີດປະໂຫຍດທາງເສດຖະກິດໃຫ້ແກ່ຕົວເມືອງ. ຄວາມສູງຂອງອາຄານ ແລະ ເຕັກນິກການອອກແບບໃຫ້ປະຕິບັດຕາມການກຳນົດຂອງການແບ່ງເຂດ ນຳໃຊ້ທີ່ດິນ ແລະ ເຂດທີ່ອະນຸຍາດໃຫ້ປຸກສ້າງອາຄານສູງຂອງຜັງເມືອງ;

3. ລະບົບນ້ຳປະປາ, ທໍ່ສົ່ງນ້ຳ, ອ່າງນ້ຳສູງ ແລະ ອຸປະກອນປະກອບຕ່າງໆ:

- ການຄຸ້ມຄອງ ແລະ ປົກປັກຮັກສາໝໍ້ແທກນ້ຳ, ນ້ຳປະປາ, ການປະກອບຕິດຕັ້ງໝໍ້ແທກນ້ຳ ແມ່ນລັດວິສາຫະກິດນ້ຳປະປາເປັນຜູ້ຕິດຕັ້ງ ເຊິ່ງລະບົບອຸປະກອນ ແລະ ການຕິດຕັ້ງ ແມ່ນຜ່ານການກວດສອບຄວາມທ່ຽງຕົງແລ້ວໜີບກົ່ວ. ກໍລະນີກົ່ວຂາດ ຫຼື ມີການດັດແປງໝໍ້ແທກນ້ຳ ເນື່ອງຈາກການກະທຳຂອງລູກຄ້າ ຈະຖືກປັບໃໝຕາມລະບຽບການ ຂອງລັດວິສາຫະກິດນ້ຳປະປາແຂວງ;

- ທຸກການເຄື່ອນໄຫວດຳເນີນວຽກງານວາງທໍ່, ປະກອບຕິດຕັ້ງ, ກວດກາ, ບຳລຸງຮັກສາລະບົບນ້ຳປະປາ, ທໍ່ສົ່ງອ່າງນ້ຳສູງ ແລະ ອຸປະກອນ ເຊັ່ນ: ການບໍ່ອຳນວຍຄວາມສະດວກ, ທຳລາຍ ຫຼື ສ້າງຄວາມເສຍຫາຍຕໍ່ລະບົບໂຄງລ່າງນ້ຳປະປາ, ບຸກລຸກແຫຼ່ງນ້ຳ, ຫຼັກອຸປະກອນປະກອບຕ່າງໆ, ດັດແປງ, ລັກລອບຕໍ່ນ້ຳ, ຍົກຍ້າຍໜໍ້ແທກນ້ຳ, ເທເບຕົງທັບ ຫຼື ຖົມດິນອຸດຕັນ, ທຸກການກະທຳທີ່ເຮັດໃຫ້ນ້ຳປະປາເປື້ອນ ແລະ ມີບັນຫາ, ການຈົດບັນທຶກຂໍ້ມູນນ້ຳປະປາ ຕ້ອງປະຕິບັດຕາມເງື່ອນໄຂການອະນຸຍາດ ແລະ ຂໍ້ຫ້າມ ຂອງລັດວິສາຫະກິດນ້ຳປະປາ ຢ່າງເຂັ້ມງວດ.

4. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທີ່ເຄື່ອນໄຫວດຳລົງຊີວິດໃນຂອບເຂດຕົວເມືອງປາກເຊ ລ້ວນແຕ່ມີຄວາມຮັບຜິດຊອບໃນການປົກປັກຮັກສາດູແລ, ບໍ່ທຳລາຍ ຫຼື ເຮັດໃຫ້ມີການກະທົບເປ່ເພຕໍ່ທຸກອົງປະກອບ, ລວມທັງສິ່ງອຳນວຍຄວາມສະດວກສາທາລະນະຕ່າງໆ ເປັນຕົ້ນ:

- ລະບົບແສງສະວ່າງ ໄຟເຍືອງທາງ - ເຍືອງຂົວ, ໄຟປະດັບເອ້, ໄຟອຳນາດ, ໄຟດອນກາງທາງ;

- ລະບົບລະບາຍນ້ຳ, ອ່າງພັກນ້ຳ, ເຮືອນຈັກໂປມນ້ຳ, ປະຕູນ້ຳ, ຄອງລະບາຍນ້ຳທຳມະຊາດ, ຄອງສາທາລະນະ ແລະ ບ່ອນບຳບັດນ້ຳເສຍຕົວເມືອງ;

- ຂົວ, ທ່າບົກ - ທ່າເຮືອ, ກັນເຈື່ອນ, ຄູກັ້ນນ້ຳ, ຫຼັກຫຼາແທກນ້ຳ ແລະ ສິ່ງປຸກສ້າງ ທາງນ້ຳໃນເຂດຕົວເມືອງ.

- ໂຄງລ່າງຄຸ້ມຄອງ ແລະ ລະບົບກຳຈັດສິ່ງເສດເຫຼືອຂີ້ເຫຍື້ອ ແລະ ສະໜາມຂີ້ເຫຍື້ອ;

- ຖັງທີ່ວາງໄວ້ເກັບທ້ອນຂີ້ເຫຍື້ອ, ຖັງຢາງແຍກຂີ້ເຫຍື້ອ, ສະຖານທີ່ວາງຖັງ, ສະຖານີຄົ່ງນຖ່າຍຂີ້ເຫຍື້ອ, ອຸປະກອນ, ພາຫານະ ລວມສິ່ງອຳນວຍຄວາມສະດວກຕ່າງໆ;

- ລະບົບສື່ສານໂທລະຄົມ, ຫຼັກອັງແຕນ, ຫຼັກສະຖານີ, ວິທະຍຸໂທລະພາບ, ຫຼັກບີເອັມເຄືອຂ່າຍ ແຜນທີ່ພູມສາດ.

ພາກສ່ວນທີ່ກ່ຽວຂ້ອງຕ້ອງປັບປຸງ, ປົວແປງ, ມັດ, ຫຸ້ມລະບົບເສົາ, ສາຍຫ້ອຍ, ສາຍໂທລະສັບ - ໂທລະຄົມການສື່ສານບໍ່ໃຫ້ຍ່ອນຍານ, ຕົກ, ຂາດ, ກີດຂວາງຕາມເສັ້ນທາງໄປມາ ຕ້ອງຈັດເປັນລະບຽບ ແລະ ມີປ້າຍບອກໄລຍະຄວາມສູງ, ຖ້າມີຄວາມຈຳເປັນ ຕ້ອງໄດ້ພົວພັນ ແລະ ໄດ້ຮັບການເຫັນດີຈາກພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 13. ຂອບທາງ, ດອນກາງທາງ, ວົງວຽນ, ເຂດສະຫງວນທາງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ເຄື່ອນໄຫວດຳລົງຊີວິດ ໃນຂອບເຂດຕົວເມືອງປາກເຊ ລ້ວນແຕ່ມີຄວາມຮັບຜິດຊອບ ໃນການປົກປັກຮັກສາດູແລ, ບໍ່ທຳລາຍ ຫຼື ເຮັດໃຫ້ມີການກະທົບເປ່ເພ ຕໍ່ອົງປະກອບເຄື່ອງໝາຍຕົວເມືອງ ເຊັ່ນ: ວົງວຽນຂັບໂມງ, ຫຸ່ນຈຳລອງວັດພູ, ນ້ຳພຸປາຊ່າ..., ປ້າຍເສັ້ນທາງ, ປ້າຍຊີ້ຖະໜົນ, ປ້າຍຮ່ອມທາງແຍກ ລວມສິ່ງອຳນວຍຄວາມສະດວກສາທາລະນະຕ່າງໆ.

## ໝວດທີ V

## ການຄຸ້ມຄອງເສັ້ນທາງ, ການສັນຈອນ, ການໃຊ້ລົດ ແລະ ໃຊ້ຖະໜົນ

### ມາດຕາ 14. ການຄຸ້ມຄອງເສັ້ນທາງ, ການສັນຈອນຂອງຄົນ, ພາຫະນະ ແລະ ການຈອດລົດ

ເສັ້ນທາງເບຕົງ ທາງສາຍເອກ ຂອງຕົວເມືອງປາກເຊ ແຕ່ຫຼັກ 9 ເໜືອ ຫາຫຼັກ 9 ໃຕ້ ໄດ້ກຳນົດການແບ່ງເລນຂັບລົດດັ່ງລຸ່ມນີ້:

- ເລນໃນ (ແປະຄອນກາງທາງ): ໃຊ້ສະເພາະລົດກະບະ, ລົດເກັງທົ່ວໄປ, ລົດສຸກເສີນ ເຊັ່ນ: ລົດຕ້ອງການລ້ຽວຊ້າຍ, ລົດຕ້ອງການລ້ຽວກັບ, ລົດຕ້ອງການຊິ່ງຂຶ້ນໜ້າ, ລົດຄົນເຈັບ, ລົດດັບເພີງ ແລະ ຂະບວນລົດການນຳ;
- ເລນກາງ (ແປະເລນຄອນກາງທາງ): ໃຊ້ສະເພາະລົດສີ່ລໍ້, ລົດຫົກລໍ້, ລົດເມ, ລົດຂົນສິ່ງໜັກເທົ່ານັ້ນ ບາງກໍລະນີລົດປະເພດອື່ນເຂົ້າມາແລ່ນໄດ້ ເວລາມີການແຊງຂັບຂີ່ ແຕ່ຕ້ອງກັບຄືນໄປເລນສະເພາະຂອງຕົນໂດຍໄວ;
- ເລນກາງ (ແປະເລນຂອບທາງ): ໃຊ້ສະເພາະລົດຈັກ, ສາມລໍ້ ຕຸກໆ, ລົດເມປະຈຳຕົວເມືອງ;
- ເລນຂອບ (ໃກ້ແຄມທາງ): ໃຊ້ສະເພາະລົດຖີບ, ກໍລະນີລ້ຽວຂວາ ແລະ ລົດຈອດຊົ່ວຄາວ;
- ສຳລັບເສັ້ນທາງປະເພດສອງ ແລະ ສາມ ຄວາມກວ້າງຫຼຸດຈາກທາງເບຕົງ (9 ເໜືອ - 9 ໃຕ້) ແມ່ນໃຫ້ປະຕິບັດຕາມກົດຈະລາຈອນທີ່ກຳນົດໄວ້ແລ້ວ.

### ມາດຕາ 15. ການຂັບຂີ່ພາຫະນະທຸກປະເພດ

ການຂັບຂີ່ພາຫະນະທຸກປະເພດ ຕ້ອງໄດ້ປະຕິບັດ ດັ່ງນີ້:

- ການຂັບຂີ່ພາຫະນະທຸກປະເພດ ຕ້ອງໄດ້ປະຕິບັດຕາມກົດລະບຽບການສັນຈອນຢ່າງເຄັ່ງຄັດ, ເວລາຂັບຂີ່ຍານພາຫະນະ ຕ້ອງພະຍາຍາມແນບເຂົ້າແຄມທາງກ້ຳຂວາຂອງຕົນສະເໝີ, ການຂັບຂີ່ລົດທຸກປະເພດ ໃນຕົວເມືອງຄວາມໄວຕ້ອງບໍ່ເກີນ 40 ກິໂລແມັດ/ຊົ່ວໂມງ;
- ຜູ້ຂັບຂີ່ຍານພາຫະນະ ຕ້ອງມີໃບຂັບຂີ່ ຈຶ່ງສາມາດຂັບຂີ່ພາຫະນະໄດ້; ສຳລັບຜູ້ຂັບຂີ່ລົດຈັກ ແລະ ຜູ້ຊ້ອນທ້າຍຕ້ອງໃສ່ໝວກກັນກະທົບທຸກຄັ້ງໃນເວລາຂັບຂີ່;
- ຖ້າມີສິ່ງຂອງຕົກເຮ່ຍອອກຈາກລົດຂອງຕົນ ໃຫ້ຄ່ອຍໆແນບເຂົ້າ ແລະ ຈອດແຄມທາງກ້ຳຂວາກ່ອນແລ້ວຈຶ່ງນຳເອົາເຄື່ອງຂອງທີ່ຕົກເຮ່ຍຢ່າງລະມັດລະວັງ;
- ລົດທຸກປະເພດ, ກ່ອນລ້ຽວ ຫຼື ປ່ຽນທິດທາງການສັນຈອນໃຫ້ຜ່ອນຄວາມໄວ, ສັນຍານກ່ອນລ້ຽວດ້ວຍໄຟສັນຍານ ຫຼື ເດ່ແຂນຊ້າຍໃນໄລຍະ 20 - 30 ແມັດ, ເບິ່ງທິດທາງ ທີ່ຈະໄປໃຫ້ຊັດເຈນ, ລະມັດລະວັງ, ເບິ່ງລະບົບໄຟອຳນາດ ຢູ່ທາງສາມແຍກ, ສີ່ແຍກ, ໄຟເຕືອນ ແລະ ການລ້ຽວລົດ;
- ສຳລັບເລນຂວາສຸດຂອງແຕ່ລະເສັ້ນ, ທາງສີ່ແຍກບ່ອນມີໄຟອຳນາດໃຫ້ລ້ຽວຂວາໄດ້ຕາມສັນຍານ, ແຕ່ຕ້ອງລະວັງ ມີຄວາມປອດໄພຈຶ່ງລ້ຽວໄດ້;
- ສຳລັບເລນຂວາສຸດ ຂອງແຕ່ລະເສັ້ນທາງສາມແຍກ ບ່ອນມີໄຟອຳນາດ ສາມາດໄປຊື່ໄດ້ຕາມສັນຍານ, ແຕ່ຕ້ອງລະວັງມີຄວາມປອດໄພຈຶ່ງໄປ.

ມາດຕາ 16. ເຂດແຄມທາງ, ທາງຄົນຍ່າງ ແລະ ການຈອດລົດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະໃນການປົກປັກຮັກສາ ແຄມທາງ, ທາງຄົນຍ່າງ ແລະ ການຈອດລົດ ດັ່ງນີ້:

- ຕ້ອງຮັກສາເຂດແຄມທາງ, ທາງຄົນຍ່າງ (ແລວປູຕົວໝອນ) ໃຫ້ເປັນພື້ນທີ່ໂລ່ງ ເພື່ອການໄປມາ, ຈອດພາຫະນະຊົ່ວຄາວ ຄົນຍ່າງເຂົ້າ - ອອກ ໃນພື້ນທີ່ເຊື່ອມຕໍ່ ລະຫວ່າງ ພາຫະນະໃນເຂດແຄມທາງຫາໜ້າເຮືອນ ສະຖານທີ່ບໍລິການ, ສຳນັກງານອົງການຕ່າງໆ;
- ເຮັດອະນາໄມ, ບໍ່ສ້າງສິ່ງກີດຂວາງ ຫຼື ຈັດວາງສິ່ງຂອງອື່ນໆມາເກະກະ, ປົດບັງ ຊຶ່ງກໍ່ໃຫ້ເກີດຄວາມບໍ່ຈົບງາມການໄປ - ມາ ພົບຄວາມຫຍຸ້ງຍາກ;
- ການຈອດລົດ ແມ່ນໃຫ້ຈອດຊົ່ວຄາວ ແລະ ຈອດແນບເຂົ້າໄປແຄມທາງ ເພື່ອບໍ່ໃຫ້ກີດຂວາງການສັນຈອນຢູ່ເຂດໜ້າທາງ, ລວມທັງການແລ່ນເຂົ້າ - ອອກ ປະຕູໜ້າເຮືອນ, ໜ້າສຳນັກງານ ຫ້ອງການຕ່າງໆ.

ມາດຕາ 17. ບ່ອນຈອດລົດໃນເຂດທຸລະກິດ, ບໍລິການ ສັງຄົມ

ຕະຫຼາດ, ຮ້ານຂາຍເຄື່ອງກໍ່ສ້າງ, ຮ້ານຂາຍເຄື່ອງກິນດື່ມ, ໂຮງແຮມ, ເຮືອນພັກ, ບໍລິສັດ, ສຳນັກງານ ອົງການຕ່າງໆ ຕ້ອງມີບ່ອນຈອດລົດເປັນຂອງຕົນເອງ ແລະ ໃຫ້ມີຜູ້ຈັດສັນແນະນຳໃນການຈອດລົດ.

## ໝວດທີ VI
## ການປົກປັກຮັກສາ ແລະ ອະນາໄມສິ່ງແວດລ້ອມ

ມາດຕາ 18. ການປົກປັກຮັກສາສິ່ງແວດລ້ອມ, ການອະນາໄມສະຖານທີ່ຕ່າງໆ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ອາໄສຢູ່ຊົ່ວຄາວ ຫຼື ຖາວອນ ໃນຕົວເມືອງປາກເຊ ຕ້ອງມີພັນທະໃນການປົກປັກຮັກສາສິ່ງແວດລ້ອມ ແລະ ເຮັດໃຫ້ເກີດຄວາມສະອາດສວຍງາມຂອງສະຖານທີ່ຕ່າງໆ ໃນຕົວເມືອງ ເຊັ່ນ: ຢູ່ຕາມພື້ນທີ່, ອາຄານ, ຫ້າງຮ້ານ, ຄອບຄົວ, ບ້ານ, ໂຮງໝໍ, ໂຮງຮຽນ, ເຮືອນໃຫ້ເຊົ່າ, ເຮືອນພັກ, ໂຮງແຮມ, ສຳນັກງານ ແລະ ສະຖານທີ່ສາທາລະນະຕ່າງໆ ຕ້ອງມີພາຊະນະເກັບມ້ຽນ ແລະ ແຍກປະເພດຂີ້ເຫຍື້ອທີ່ເກັບຮັກສາໄວ້ໃຫ້ດີ ໃນເຂດຮັບຜິດຊອບຂອງຕົນ ກ່ອນການເຄື່ອນຍ້າຍໄປທີ່ອື່ນ.

ຕ້ອງປັບປຸງບົບໂຄງລ່າງພື້ນຖານ ຮັບໃຊ້ພາຍໃນຂອງຕົນໃຫ້ດີເປັນປົກກະຕິ ເຊັ່ນ: ລະບົບຄອງລະບາຍນ້ຳ, ສິ່ງເສດເຫຼືອ, ຕົ້ນໄມ້, ດອກໄມ້, ບ່ອນຈອດລົດ, ເສົາສາຍໄຟຟ້າ, ໂທລະຄົມ, ຫ້ອງນ້ຳທີ່ພຽງພໍ ແລະ ຖືກຫຼັກສຸຂະອະນາໄມ ໂດຍການປະສານສົມທົບກັບພາກສ່ວນກ່ຽວຂ້ອງ.

ມາດຕາ 19. ການຈູດທຳລາຍ, ການຖອກ ຫຼື ຖິ້ມຂີ້ເຫຍື້ອ, ສິ່ງເສດເຫຼືອ ແລະ ເສດວັດສະດຸກໍ່ສ້າງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງເກັບມ້ຽນ, ທ້ອນໂຮມຂີ້ເຫຍື້ອ, ສິ່ງເສດເຫຼືອຂອງຕົນ ໂດຍການແຍກປະເພດ, ເກັບຮັກສາໄວ້ຊົ່ວຄາວ ໃນສະຖານທີ່ ທີ່ຮັບປະກັນ ຄວາມບໍ່ເປິເປື້ອນ, ກິ່ນເໝັນ ກ່ອນ

ການຂົນຍ້າຍໄປບ່ອນທີ່ກຳນົດໄວ້. ຄວນຫຼີກລ່ຽງການເກັບມ້ຽນຂີ້ເຫຍື້ອປົນກັນມ້ອນໃສ່ຖົງ ຫຼື ຖັງ, ກະ ຕ່າ ດຽວກັນ ຊຶ່ງກໍ່ໃຫ້ເກີດກິ່ນເໝັນໄວ ແລະ ມີປະຕິກິລິຍາຄວາມເປິເປື້ອນໄວຂຶ້ນ.

**ມາດຕາ 20. ສະຖານທີ່ ແລະ ສວນສາທາລະນະ**

ສະຖານທີ່ສາທາລະນະ ທີ່ອົງການພັດທະນາ ແລະ ບໍລິຫານຕົວເມືອງຮັບຜິດຊອບ ຕ້ອງປົກປັກຮັກສາ, ປູກຕົ້ນໄມ້, ດອກໄມ້ປະດັບ, ອະນາໄມສະຖານທີ່ ໃຫ້ມີຄວາມສະອາດ, ຕັດແຕ່ງກິ່ງງ່າໄມ້, ໃບໄມ້, ບູລະ ນະ ຮັກສາ ໃຫ້ເປັນລະບຽບສວຍງາມເປັນປົກກະຕິ.

ບຸກຄົນ, ຄອບຄົວ, ບໍລິສັດ, ຫ້າງຮ້ານ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງລັດ ມີພັນທະ ປົກ ປັກຮັກສາອະນາໄມຕະຄອງຮ່ອງນ້ຳ, ເສັ້ນທາງ, ທາງຍ່າງ, ປູກ ແລະ ບົວລະບັດຕົ້ນໄມ້ ອ້ອມຮອບທີ່ຢູ່ອາໄສ ໃຫ້ມີຄວາມຂຽວງາມຢູ່ສະເໝີ ລວມທັງການຕິດຕັ້ງ ຕົບແຕ່ງ ປະດັບປະດາຕ່າງໆ ອົງປະກອບສິ່ງສາທາລະນະ ໃຫ້ມີຄວາມສວຍງາມດີຂຶ້ນ.

**ມາດຕາ 21. ການຮັກສາສັດລ້ຽງປະເພດຕ່າງໆ**

ບຸກຄົນ, ຄອບຄົວ, ນິຕິບຸກຄົນ, ການຈັດຕັ້ງ ຕ້ອງຮັບຜິດຊອບຕໍ່ສັດລ້ຽງຂອງຕົນ ຮັບປະກັນບໍ່ໃຫ້ ສັດລ້ຽງລ່ວງລ້ຳເຂົ້າມາໃນເຂດຕົວເມືອງ ໂດຍສະເພາະໃນເຂດເສັ້ນທາງ ແລະ ເຂດສຳນັກງານອົງການ.

## ໝວດທີ VII
## ການຂົນສົ່ງໃນຕົວເມືອງ

**ມາດຕາ 22. ການຂົນສົ່ງສິນຄ້າ, ໂດຍສານ, ສະຖານີຈອດລົດ, ການແລ່ນລົດເຂົ້າ - ອອກຕົວເມືອງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຂົນສົ່ງສິນຄ້າ, ໂດຍສານ, ສະຖານີຈອດລົດ, ການ ແລ່ນລົດເຂົ້າ - ອອກ ຕົວເມືອງ ໃຫ້ປະຕິບັດ ດັ່ງນີ້:

- ທຸກການເຄື່ອນຍ້າຍ, ຂົນສົ່ງແຮ່, ຊາຍ, ດິນ, ສິ່ງເສດເຫຼືອ ແລະ ວັດຖຸຕ່າງໆ ຜ່ານຕົວເມືອງປາກເຊ ຕ້ອງໄດ້ຫຸ້ມຫໍ່, ປົກປິດໃຫ້ແໜ້ນໜາ, ຮັບປະກັນ ບໍ່ໃຫ້ຕົກເຮ່ຍ ຕາມຖະໜົນຫົນທາງ ສ້າງຄວາມເປິະເປື້ອນ, ຫຍຸ້ງຍາກ ແລະ ເປັນອັນຕະລາຍຕໍ່ຜູ້ຊົມໃຊ້ເສັ້ນທາງ;
- ສຳລັບລົດຂົນສົ່ງ, ລົດບັນທຸກ ທຸກປະເພດ ກ່ອນຈະເຄື່ອນຍ້າຍ ຫຼື ແລ່ນຜ່ານ ຂອບເຂດຕົວເມືອງປາກ ເຊ ຕ້ອງກວດກາຄວາມສະອາດຂອງລໍ້ລົດຕົນເອງ ຢ່າງເປັນປົກກະຕິ ທັງນີ້ເພື່ອຮັກສາຄວາມສະອາດຕາມ ເສັ້ນທາງຫຼວງ;
- ສຳລັບລົດບັນທຸກໜັກ, ລົດບັນທຸກວັດຖຸທີ່ເປັນພິດ, ສານເຄມີ, ທາດລະເບີດ, ສິ່ງຂອງເກີນຂະໜາດ ແຕ່ໄດ້ອະນຸຍາດບັນທຸກ, ລົດຂົນສົ່ງສິນຄ້າທີ່ມີຂະໜາດບັນທຸກສິນຄ້າລວມທັງນ້ຳໜັກຕົວລົດ 15 ໂຕນຂຶ້ນ ໄປ, ລົດຂົນສົ່ງໂດຍສານຂະໜາດບັນທຸກຜູ້ໂດຍສານ 26 ບ່ອນນັ່ງຂຶ້ນໄປ ໃຫ້ໃຊ້ທາງເວັ້ນຕົວເມືອງປາກເຊ, ໃນກໍລະນີ ຍັງບໍ່ທັນມີທາງເວັ້ນຕົວເມືອງປາກເຊ ໃຫ້ນຳໃຊ້ເສັ້ນທາງທີ່ໄດ້ກຳນົດໄວ້ ດັ່ງນີ້:

+ ເສັ້ນທາງ 13 ເໜືອ (ທາງເບຕົງ ຫຼັກ 7 ເໜືອ) - ວົງວຽນສາມແຍກເດີ່ນບິນ - ຂົວ 2 ທັນວາ (ຂົວໄຊວຽດ) ເຖິງວົງວຽນ ຫາທາງ 13 ໃຕ້ (ທາງເບຕົງຫຼັກ 8 ໃຕ້);

+ ເສັ້ນທາງຫົວຂົວນໍ້າຂອງເບື້ອງເມືອງປາກເຊ ຫາ ສາມແຍກເດີ່ນບານ;

+ ເສັ້ນທາງສາລາຂຽວດົງຈອງ ແຕ່ວົງວຽນຂົວນໍ້າຂອງ ຫາ ທາງ 13 ໃຕ້ (ສີ່ແຍກໄຟແດງຫຼັກ 9);

+ ເສັ້ນທາງອື່ນໆ ໃນກໍລະນີມີຄວາມຈໍາເປັນ ໃຫ້ຂໍອະນຸຍາດນໍາອົງການທີ່ມີສິດຄຸ້ມຄອງເສັ້ນທາງ ເຊັ່ນ: ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ແລະ ອົງການພັດທະນາ ແລະ ບໍລິຫານຕົວເມືອງ.

**ມາດຕາ 23. ການກໍານົດເວລາໃນການແລ່ນລົດເຂົ້າ - ອອກຕົວເມືອງ**

ລົດຂົນສົ່ງສິນຄ້າທີ່ມີ ຂະໜາດບັນທຸກສິນຄ້າ ລວມທັງນໍ້າໜັກຕົວລົດ 15 ໂຕນຂຶ້ນໄປ, ລົດຂົນສົ່ງໂດຍສານຂະໜາດບັນທຸກຜູ້ໂດຍສານ 26 ບ່ອນນັ່ງຂຶ້ນໄປ ບໍ່ອະນຸຍາດແລ່ນຜ່ານເຂົ້າຕົວເມືອງໃນຊົ່ວໂມງເລັ່ງດ່ວນ ແອອັດຄື: ຕອນເຊົ້າ ແຕ່ 7 ໂມງ 30 ນາທີ ຫາ 8 ໂມງ 30 ນາທີ ແລະ ຕອນແລງ ແຕ່ 16 ໂມງ 00 ນາທີ ຫາ 17 ໂມງ 00 ນາທີ.

**ມາດຕາ 24. ການຈະລາຈອນ ຂອງພາຫະນະຕາມເສັ້ນທາງຊອຍໃນຕົວເມືອງ**

ເສັ້ນທາງນ້ອຍ, ທາງຮ່ອມໃນເທດສະບານ ຕ້ອງໃຊ້ລົດຂົນສົ່ງປະເພດນ້ອຍ ແລະ ກາງ ຊຶ່ງມີຂະໜາດບັນທຸກນໍ້າໜັກສິນຄ້າ ລວມທັງນໍ້າໜັກຕົວລົດ 15 ໂຕນລົງມາ, ພ້ອມກັນນັ້ນ ການຈອດຕາມເສັ້ນທາງ ເພື່ອເອົາເຄື່ອງຂຶ້ນ ຫຼື ລົງ ບໍ່ໃຫ້ໃຊ້ເວລາເກີນໜຶ່ງຊົ່ວໂມງຕໍ່ຖ້ຽວ, ຖ້າເປັນລົດຂົນສົ່ງທີ່ມີຂະໜາດບັນທຸກນໍ້າໜັກສິນຄ້າລວມທັງຕົວລົດທີ່ເກີນ 15 ໂຕນຂຶ້ນໄປ ຕ້ອງໄດ້ຮັບອະນຸຍາດຈາກພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ.

**ມາດຕາ 25. ການຈອດລົດໃນຂອບເຂດຕົວເມືອງປາກເຊ**

ການຈອດລົດໃນຂອບເຂດຕົວເມືອງປາກເຊ ຕ້ອງຈອດຕາມສະຖານທີ່ ທີ່ໄດ້ກໍານົດໄວ້ ແລະ ຈັດສັນໃຫ້. ລົດຂົນສົ່ງສິນຄ້າ ແລະ ລົດໂດຍສານ ຕ້ອງເຂົ້າຈອດຕາມສະຖານີທີ່ກໍານົດໄວ້.

**ມາດຕາ 26. ສະຖານທີ່ຈອດ ຂອງລົດຕໍ່ອກງ, ໄຖນາເດີນຕາມ, ຕຸກໆ, ສະກາຍແລັບ ແລະ ລົດ 3 ລໍ້**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຈອດລົດຕໍ່ອກງ, ໄຖນາເດີນຕາມ, ຕຸກໆ, ສະກາຍແລັບ ແລະ ລົດ 3 ລໍ້ ໃຫ້ປະຕິບັດດັ່ງນີ້:

1. ລົດຕໍ່ອກງ, ລົດໄຖນາເດີນຕາມ ທີ່ມາຈາກ:

- ທິດໃຕ້, ທິດຕາເວັນອອກ ຂອງຕົວເມືອງປາກເຊ ໝາຍຄວາມວ່າມາຈາກທິດເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ, ເມືອງປະທຸມພອນ ໃຫ້ຈອດຢູ່ສະຖານີລົດໂດຍສານ ຫຼັກ 8 ໃຕ້ (ລົດມາຕະຫຼາດ);

- ທິດເໜືອຂອງເມືອງປາກເຊ ໝາຍຄວາມວ່າມາຈາກທິດເມືອງຊະນະສົມບູນ ໃຫ້ຈອດຢູ່ສະຖານີລົດໂດຍສານແຂວງຈໍາປາສັກ ຫຼັກ 7 ເໜືອ (ລົດມາຕະຫຼາດ);

- ທິດຕາເວັນຕົກຂອງເມືອງປາກເຊ ໝາຍຄວາມວ່າມາຈາກເມືອງໂພນທອງ ບໍ່ໃຫ້ຜ່ານເຂົ້າມາຕົວເມືອງ ເລີ່ມແຕ່ຈຸດເສັ້ນທາງ ສີ່ແຍກບ້ານຫ້ວຍເຜັກ;

- ທິດຕາເວັນອອກ ທີ່ມາຈາກທິດບ້ານຊີ້ງ, ບ້ານນາຈຽງ, ບ້ານແຫ່, ໂພດາກ ໃຫ້ຈອດຢູ່ຫ້ອງການບ້ານແກ.

2. ລົດຕ່ອກໆ, ລົດໄຖນາເດີນຕາມ ສາມາດຜ່ານຕົວເມືອງປາກເຊໄດ້ໃນກໍລະນີຈໍາເປັນ ແຕ່ຕ້ອງໄດ້ຂໍອະນຸຍາດຈາກເຈົ້າໜ້າທີ່ປະຈໍາຢູ່ເຂດນັ້ນເສຍກ່ອນ;

3. ລົດຕຸກໆ, ລົດສະກາຍແລັບ ແລະ ລົດ 3 ລໍ້ ຕ້ອງຈອດຕາມສະຖານທີ່ ທີ່ໄດ້ກໍານົດໄວ້ ແລະ ຈອດແບບແຄມທາງໃນໄລຍະໃດໜຶ່ງ ທີ່ເຫັນວ່າ ບໍ່ກີດຂວາງຕໍ່ການສັນຈອນຕາມເສັ້ນທາງ.

**ມາດຕາ 27. ສະຖານີລົດໂດຍສານພາຍໃນແຂວງ ( ລະຫວ່າງ ເມືອງ ຫາ ເມືອງ )**

ລົດໂດຍສານ ພາຍໃນແຂວງ ທີ່ມີໃບອະນຸຍາດດໍາເນີນທຸລະກິດ ແລ່ນລົດໄລຍະທາງ 40 ກິໂລແມັດລົງມາ, ລົດທີ່ມີໃບອະນຸຍາດແລ່ນພາຍໃນເທດສະບານ ໃຫ້ນໍາໃຊ້ສະຖານີຈອດລົດຂອງຕະຫຼາດໃໝ່ ເມືອງປາກເຊ, ຕະຫຼາດສະບາຍດີ, ຕະຫຼາດສູນການຄ້າ, ທ່າສາລາຄໍາ, ຕະຫຼາດມີໄຊ (ທ່າຫີນ) ແລະ ສະຖານີອື່ນໆ ທີ່ລັດກໍານົດໃຫ້.

ສໍາລັບລົດໂດຍສານພາຍໃນແຂວງຈໍາປາສັກ, ລົດໂດຍສານສາຍເມືອງມູນລະປາໂມກ, ສາຍເມືອງສຸຂຸມາ, ສາຍເມືອງຈໍາປາສັກ ທີ່ແລ່ນຫາ ເມືອງປາກເຊ ຊຶ່ງມີໃບອະນຸຍາດດໍາເນີນທຸລະກິດ ແລ່ນເກີນ 40 ກິໂລແມັດຂຶ້ນໄປ ກໍສາມາດເຂົ້າຈອດຮັບ ຫຼື ສົ່ງຜູ້ໂດຍສານ ຢູ່ໃນຄິວເທດສະບານໄດ້ ເມື່ອລົດໂດຍສານດັ່ງກ່າວຫາກ ໃຊ້ຕົ້ນທາງ ຫຼື ປາຍທາງ ຜ່ານຂົວນໍ້າຂອງລາວ - ຍີ່ປຸ່ນ.

ສ່ວນລົດໂດຍສານ ລະຫວ່າງ ແຂວງ ສາຍທ້ອງຖິ່ນ, ຈໍາປາສັກ - ສາລະວັນ ທີ່ໃຊ້ເສັ້ນທາງເລກທີ 13 ເໜືອ ເມືອງປາກເຊ ກໍໃຫ້ຈອດຄິວເທດສະບານ ຮ່ວມກັບລົດໂດຍສານ ຂອງເມືອງຊະນະສົມບູນໄດ້.

ທັງໝົດລົດໂດຍສານສາຍເມືອງໂພນທອງ, ເມືອງຊະນະສົມບູນ ແລະ ເມືອງບາຈຽງຈະເລີນສຸກ ສາມາດເຂົ້າຮັບ ຫຼື ສົ່ງຜູ້ໂດຍສານຢູ່ຄິວລົດໂດຍສານເທດສະບານເມືອງປາກເຊ ຕາມໃບອະນຸຍາດແລ່ນລົດ.

ລົດໂດຍສານພາຍໃນແຂວງຈໍາປາສັກ ທີ່ມີໃບອະນຸຍາດແລ່ນລົດເກີນ 40 ກິໂລແມັດ ຂຶ້ນໄປ ນອກຈາກກໍລະນີ ທີ່ກໍານົດໄວ້ໃນວັກ 2 ແລະ 3 ຂ້າງເທິງນັ້ນ ໃຫ້ນໍາໃຊ້ສະຖານີລົດໂດຍສານແຂວງຈໍາປາສັກຫຼັກ 8 ໃຕ້.

**ມາດຕາ 28. ສະຖານີລົດໂດຍສານທາງໄກ ລະຫວ່າງ ແຂວງ ແລະ ຕ່າງປະເທດ**

ລົດໂດຍສານທໍາມະດາ, ລົດໂດຍສານປັບອາກາດປະເພດ 2, ລົດໂດຍສານປັບອາກາດປະເພດ 1 ແລະ ລົດໂດຍສານສາຍທາງ ລະຫວ່າງ ແຂວງ ແລະ ຕ່າງປະເທດ ໃຫ້ປະຕິບັດດັ່ງນີ້:

- ລົດໂດຍສານທາງໄກ ລະຫວ່າງ ແຂວງ ແລະ ຕ່າງປະເທດທີ່ມາຈາກທິດເໜືອຂອງເມືອງປາກເຊ ໃຫ້ໃຊ້ສະຖານີລົດໂດຍສານຫຼັກ 7 ສາຍເໜືອ;

- ລົດໂດຍສານ ລະຫວ່າງ ສາຍທາງແຂວງຕິດຈອດ ທີ່ມາຈາກທິດຕາເວັນອອກຂອງເມືອງປາກເຊ ເຊັ່ນ: ຈໍາປາສັກ - ສາລະວັນ, ຈໍາປາສັກ - ເຊກອງ, ຈໍາປາສັກ - ອັດຕະປື ແມ່ນໃຫ້ນໍາໃຊ້ສະຖານີລົດໂດຍສານຫຼັກ 8 ສາຍໃຕ້;

- ລົດໂດຍສານທາງໄກ ຜ່ານເທດສະບານເມືອງປາກເຊ, ໄລຍະທີ່ບໍ່ທັນມີທາງເວັ້ນຕົວເມືອງປາກເຊ ແມ່ນໃຫ້ນໍາໃຊ້ສະຖານີລົດໂດຍສານຫຼັກ 7 ສາຍເໜືອ ຫຼື ຫຼັກ 8 ສາຍໃຕ້. ເວລາທີ່ແລ່ນຜ່ານເມືອງປາກເຊ ຫ້າມຈອດຮັບ ຫຼື ສົ່ງຜູ້ໂດຍສານ ຕາມເສັ້ນທາງໃນຕົວເມືອງປາກເຊ.

**ມາດຕາ 29. ການປ່ອຍລົດໂດຍສານອອກຈາກສະຖານີ**

ໃນການປ່ອຍລົດເມ ບັນທຸກຜູ້ໂດຍສານ ອອກຈາກສະຖານີ ຫຼື ຄິວ ແຕ່ລະເທື່ອ ບໍລິສັດຂົນສົ່ງໂດຍສານທີ່ໄດ້ ຮັບອະນຸຍາດ ຕ້ອງຮັບປະກັນໃຫ້ມີຄວາມເປັນລະບຽບ, ບໍລິການຊື່ສັດ, ທ່ຽງທຳ, ມີຄ່າໂດຍສານທີ່ຊັດເຈນ, ບໍ່ເອົາປຽບຜູ້ໂດຍສານ ມາດຖານເຕັກນິກລົດ, ລວມຜູ້ຂັບຂີ່ທັງໝົດໃນລົດໂດຍສານ.

ຕ້ອງມີແຜນການເດີນລົດ, ກຳນົດເວລາ, ການສື່ສານ, ທັດສະນະວິໄສ, ວິນັຍໃນການຂັບຂີ່, ຄຸນສົມບັດຜູ້ຂັບລົດ ໃຫ້ມີຄວາມສະດວກປອດໄພ ຈົນເຖິງຈຸດໝາຍປາຍທາງທີ່ກຳນົດໄວ້.

**ມາດຕາ 30. ເອກະສານລົດ, ມາດຕະຖານເຕັກນິກຂອງພາຫະນະຂົນສົ່ງສິນຄ້າ ແລະ ລົດໂດຍສານ**

ຜູ້ຂັບຂີ່ລົດຂົນສົ່ງສິນຄ້າ ແລະ ລົດໂດຍສານ ຕ້ອງຖື ແລະ ມີເອກະສານທີ່ຖືກຕ້ອງ ຄົບຖ້ວນ ຕາມການກຳນົດຂອງລະບຽບການ, ກົດໝາຍວ່າດ້ວຍຂົນສົ່ງທາງບົກ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

ປະກອບຕິດຕັ້ງອຸປະກອນມອດໄຟ, ອຸປະກອນປະກອບອື່ນໆ ຕາມເງື່ອນໄຂລະບຽບການ ແລະ ມາດຕະຖານເຕັກນິກ, ການບໍລິການ ໃຫ້ຄົບຖ້ວນພຽງພໍ ແລະ ມີຄວາມສະດວກວ່ອງໄວ ໃນກໍລະນີຕິດຂັດ ຫຼື ສຸກເສີນຕ່າງໆ. ບໍລິສັດ, ສະມາຄົມລົດຂົນສົ່ງສິນຄ້າ ແລະ ໂດຍສານ ຕ້ອງຈອດລົດຂອງຕົນຢູ່ນອກພື້ນທີ່ຕົວເມືອງ, ຖ້າມີຄວາມຈຳເປັນຕ້ອງນຳລົດເຂົ້າມາໃນຕົວເມືອງ, ຕ້ອງມີບ່ອນຈອດລົດທີ່ພຽງພໍ ຮັບປະກັນເປັນຂອງຕົນເອງພ້ອມທັງມີເສັ້ນທາງເຂົ້າ - ອອກ ທີ່ໄດ້ມາດຕະຖານ.

ກຸ່ມບ້ານ ແລະ ບ້ານ ທີ່ຖືກກຳນົດຈອດພາຫະນະ ທີ່ບໍ່ອະນຸຍາດຜ່ານເຂົ້າໄປໃນຕົວເມືອງ ຕ້ອງໄດ້ກຳນົດການຈັດສັນສະຖານທີ່ຊົ່ວຄາວ ເພື່ອເປັນບ່ອນຈອດ ລໍການຄ່ຽນຖ່າຍຜູ້ໂດຍສານ, ສິ່ງຂອງ ແລະ ສິນຄ້າ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ VIII
## ການຢູ່ອາໄສ, ຄ້າຂາຍໃກ້ແຄມທາງ ແລະ ຄວາມສະຫງົບສຸກ

**ມາດຕາ 31. ການຢູ່ອາໄສ, ຄ້າຂາຍໃກ້ແຄມເສັ້ນທາງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ອາໄສໃກ້ແຄມເສັ້ນທາງ ທີ່ມີຈຸດປະສົງຄ້າຂາຍ ໃຫ້ປະຕິບັດ ດັ່ງນີ້:

- ຕ້ອງມີສະຖານທີ່ ແລະ ມີໄລຍະຫ່າງ ຈາກແຄມທາງເຂົ້າໄປ ໃຫ້ໄດ້ 5 - 10 ແມັດ ຮອດເຂດຄ້າຂາຍ, ຈຶ່ງພື້ນທີ່ຫວ່າງໄວ້ ເພື່ອການຈອດລົດ ຂອງຜູ້ມາຊື້ບໍລິການ ແລະ ເພື່ອຄວາມສະອາດປອດໄພ;
- ອອກແບບ ຈັດສັນບ່ອນຂາຍເຄື່ອງໃຫ້ເປັນລະບົບ, ລະບຽບ ຫຼືກລຽງຕ່າງຄົນຕ່າງເຮັດ, ໃນນັ້ນ ຕ້ອງມີ ຄະນະກຳມະການຈັດສັນ ຂອງຄຸ້ມບ້ານເປັນຜູ້ຄວບຄຸມຢ່າງເຂັ້ມງວດ.

**ມາດຕາ 32. ການຄຸ້ມຄອງພົນລະເມືອງລາວ, ຊາວຕ່າງດ້າວ ແລະ ຊາວຕ່າງປະເທດ**

ຄອບຄົວທີ່ມີພີ່ນ້ອງ, ແຂກມາຢ້ຽມຢາມ ພັກເຊົາ ຫົວໜ້າຄອບຄົວຕ້ອງແຈ້ງໃຫ້ແກ່ອຳນາດການປົກຄອງບ້ານຊາບພາຍໃນ 24 ຊົ່ວໂມງ.

ອົງການປົກຄອງບ້ານ, ການຈັດຕັ້ງຕ່າງໆ ທີ່ກ່ຽວຂ້ອງກັບສະຖານທີ່ ຕ້ອງເປັນເຈົ້າການບໍ່ອະນຸຍາດໃຫ້ຄົນເລ່ລ່ອນ ນັບທັງຄົນໄບ້, ເປັນບ້າ, ເສັຍຈິດ ນຳໃຊ້ສະຖານທີ່ຕະຫຼາດ, ແຄມທາງ, ບ່ອນສາທາລະນະຕ່າງໆ ເປັນບ່ອນເຄື່ອນໄຫວ, ພັກອາໄສ, ຫຼັບນອນ, ຂໍທານຢ່າງເດັດຂາດ ຖ້າພົບເຫັນຕ້ອງໄດ້ຈັດສົ່ງຄືນບ້ານເດີມ ຫຼື ລາຍງານໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບກ່ອນ.

**ມາດຕາ 33. ການຄຸ້ມຄອງຮ້ານກິນດື່ມ, ຮ້ານບໍລິການບັນເທີງ, ເຮືອນພັກ, ຫໍພັກນັກສຶກສາ, ເຮືອນໃຫ້ເຊົ່າ, ໂຮງແຮມ, ໂຮງຮຽນ**

ເຈົ້າຂອງ ຫຼື ຜູ່ປະກອບການດຳເນີນທຸລະກິດຮ້ານກິນດື່ມ, ຮ້ານບໍລິການບັນເທີງ, ເຮືອນພັກ, ຫໍພັກນັກສຶກສາ, ເຮືອນໃຫ້ເຊົ່າ, ໂຮງແຮມ, ໂຮງຮຽນຕ່າງໆ ຕ້ອງຮັບຜິດຊອບຕໍ່ການຮັກສາຄວາມສະຫງົບ, ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນສະຖານທີ່ຂອງຕົນ.

## ໝວດທີ IX
## ອົງການຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງປາກເຊ

ມາດຕາ 34. ອົງການຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຕົວເມືອງ ປາກເຊ.

ອົງການປົກຄອງແຂວງ ເປັນຜູ່ຄຸ້ມຄອງ ວຽກງານຄວາມເປັນລະບຽບຮຽບຮ້ອຍ ພາຍໃນຕົວເມືອງປາກເຊຢ່າງລວມສູນ, ເປັນເອກະພາບ ໂດຍມອບໃຫ້ອົງການປົກຄອງເມືອງປາກເຊ ເປັນຜູ່ຮັບຜິດຊອບໂດຍກົງ ທັງເປັນເຈົ້າການ ປະສານສົມທົບ ກັບພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ອົງການພັດທະນາ ແລະ ບໍລິຫານຕົວເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ໃຫ້ບັນດາພະແນກການຂອງແຂວງ ຕ້ອງໄດ້ມອບໜ້າທີ່ຄວາມຮັບຜິດຊອບ ໃຫ້ແກ່ສາຍຕັ້ງຂອງຕົນຢູ່ໃນເມືອງປາກເຊ.

+ ອົງການຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງປາກເຊ ປະກອບດ້ວຍ:
  1. ອົງການປົກຄອງເມືອງປາກເຊ;
  2. ພະແນກໂຍທາທິການ ແລະ ຂົນສົ່ງແຂວງ;
  3. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ;
  4. ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ;
  5. ພະແນກສຶກສາທິການ ແລະ ກິລາແຂວງ;
  6. ກອງບັນຊາການປ້ອງກັນຄວາມສະຫງົບແຂວງ;
  7. ອົງການພັດທະນາ ແລະ ບໍລິຫານຕົວເມືອງ;
  8. ອົງການປົກຄອງບ້ານ.

**ມາດຕາ 35. ສິດ ແລະ ໜ້າທີ່ຂອງອົງການປົກຄອງເມືອງປາກເຊ**

ອົງການປົກຄອງເມືອງປາກເຊ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບ ກັບບັນດາພະແນກການຂອງແຂວງ, ສໍານັກງານອົງການ, ບັນດາຫົວໜ່ວຍທຸລະກິດຕ່າງໆ ຕະຫຼອດຮອດອໍານາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ຕ້ອງໄດ້ຮັບຮູ້ເຂົ້າໃຈເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍພາຍໃນຕົວເມືອງປາກເຊ ຢ່າງເຂັ້ມງວດ;

2. ຕິດຕາມ, ກວດກາ ການຮັກສາຄວາມສະອາດສວຍງາມ, ຄວາມເປັນລະບຽບຮຽບຮ້ອຍພາຍໃນຕົວເມືອງ ປາກເຊ, ກ່າວເຕືອນ, ສຶກສາອົບຮົມຕໍ່ຜູ້ລະເມີດ ແລະ ນໍາໃຊ້ມາດຕະການຕ່າງໆ ຕາມຄວາມເໝາະສົມ. ຕໍ່ຜູ້ທີ່ມີຄວາມບຸກບືນຫ້າວຫັນປະກອບສ່ວນເຂົ້າໃນວຽກງານດັ່ງກ່າວ ຕ້ອງໄດ້ສະເໜີຍ້ອງຍໍຕາມຂັ້ນຕອນຕ່າງໆທີ່ໄດ້ກໍານົດໄວ້;

3. ສະຫລຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ພາຍໃນຕົວເມືອງປາກເຊ ໃຫ້ສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງຮັບຊາບຢ່າງເປັນປົກກະຕິ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 36. ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ**

ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ດໍາເນີນການກວດກາ ການເຄື່ອນໄຫວຂອງບັນດາກອງວິຊາການ ແລະ ຮາກຖານການຜະລິດ - ທຸລະກິດ ຢ່າງເປັນປະຈໍາ, ກ່າວເຕືອນ, ສັ່ງໂຈະ, ປັບໃໝ, ຮ້ອງຟ້ອງຕໍ່ການຈັດຕັ້ງທີ່ມີສິດອໍານາດ ເພື່ອດໍາເນີນຄະດີຕໍ່ຜູ້ລະເມີດ ແລະ ການກະທໍາຜິດຕໍ່ກົດໝາຍ ຫຼື ລະບຽບການ, ສະເໜີຍ້ອງຍໍຕໍ່ຜູ້ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

2. ອອກແຈ້ງການ ແລະ ຄໍາແນະນໍາ ໃຫ້ບັນດາຫົວໜ່ວຍວິຊາການ ແລະ ທຸລະກິດ;

3. ຄຸ້ມຄອງການກໍ່ສ້າງ, ການບູລະນະຮັກສາ ແລະ ສ້ອມແປງເສັ້ນທາງ ໃນຂອບເຂດແຂວງ ຕາມການມອບໝາຍຂອງຂັ້ນເທິງ;

4. ຄຸ້ມຄອງລະບົບເຕັກນິກ ເພື່ອຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນການສັນຈອນ ຕາມເສັ້ນທາງບົກ;

5. ຄຸ້ມຄອງ ແລະ ປົກປັກຮັກສາສະຖານທີ່ສາທາລະນະ, ຄວາມສະອາດ, ສິ່ງແວດລ້ອມ, ອະນຸລັກ ແລະ ສິ່ງເສີມສະຖາປັດຕະຍະກໍາ ທີ່ເປັນເອກະລັກ ຂອງປະຊາຊົນບັນດາເຜົ່າພາຍໃນແຂວງ;

6. ປະສານສົມທົບ ກັບກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ອົງການພັດທະນາ ແລະ ບໍລິຫານຕົວເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ ເພື່ອປູກຈິດສໍານຶກໃຫ້

ແກ່ປະຊາຊົນພາຍໃນຕົວເມືອງປາກເຊ ກ່ຽວກັບວຽກງານ ຄຸ້ມຄອງ-ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງປາກເຊ;

7. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານ ການຄຸ້ມຄອງ ແລະ ການຈັດສັນຄວາມເປັນລະບຽບຮຽບຮ້ອຍພາຍໃນຕົວເມືອງປາກເຊ ໃຫ້ສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງ ຢ່າງເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 37. ສິດ ແລະ ໜ້າທີ່ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ**

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງຈິດສຳນຶກໃຫ້ແກ່ມວນຊົນໃນການຄຸ້ມຄອງ, ອະນຸລັກ ນຳໃຊ້ ແລະ ຟື້ນຟູ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ ລວມທັງວຽກງານຄຸ້ມຄອງໄພພິບັດທຳມະຊາດ, ການປ່ຽນແປງດິນຟ້າອາກາດ, ອຸຕຸນິຍົມ ແລະ ອຸທົກກະສາດ;

2. ຄຸ້ມຄອງ, ປົກປັກຮັກສາສິ່ງແວດລ້ອມ, ຊັບພະກອນທຳມະຊາດ ແລະ ລະບົບນິເວດ ໃຫ້ມີຄວາມອຸດົມສົມບູນ, ຕິດຕາມ ກວດກາຄຸນນະພາບສິ່ງແວດລ້ອມ, ຄວບຄຸມມົນລະພິດທາງນ້ຳ, ດິນ, ອາກາດ ແລະ ສຽງ ຕາມມາດຖານສິ່ງແວດລ້ອມແຫ່ງຊາດ;

3. ພັດທະນາ ລະບົບ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ລວມທັງວຽກງານຄຸ້ມຄອງໄພພິບັດທຳມະຊາດ, ການປ່ຽນແປງດິນຟ້າອາກາດ ອຸຕຸນິຍົມ ແລະ ອຸທົກກະສາດ;

4. ທວງເອົາເອກະສານທີ່ຈຳເປັນ ຈາກບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງທີ່ກ່ຽວຂ້ອງ ທີ່ພົວພັນເຖິງບັນຫາ ຫຼື ຂໍ້ຂັດແຍ່ງທີ່ພົວພັນກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງວຽກງານຄຸ້ມຄອງໄພພິບັດທຳມະຊາດ, ການປ່ຽນແປງດິນຟ້າອາກາດ ອຸຕຸນິຍົມ ແລະ ອຸທົກກະສາດ;

5. ອອກໃບອະນຸຍາດ ໃນການດຳເນີນທຸລະກິດຂອງຫົວໜ່ວຍທຸລະກິດຕ່າງໆ ທີ່ເຫັນວ່າ ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ, ພ້ອມທັງຕິດຕາມ ກວດກາ ແລະ ຄຸ້ມຄອງຫົວໜ່ວຍທຸລະກິດຕ່າງໆ ໃຫ້ປະຕິບັດຕາມຂໍ້ກຳນົດກົດລະບຽບ ແລະ ກົດໝາຍສິ່ງແວດລ້ອມຢ່າງເຂັ້ມງວດ;

6. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງວຽກງານການຄຸ້ມຄອງ ແລະ ການຈັດສັນຄວາມເປັນລະບຽບຮຽບຮ້ອຍພາຍໃນຕົວເມືອງປາກເຊ ໃຫ້ສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງ ຢ່າງເປັນປົກກະຕິ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 38. ສິດ ແລະ ໜ້າທີ່ ຂອງພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ**

ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊຸກຍູ້, ຕິດຕາມ, ກວດກາ, ແນະນຳ ແລະ ອະນຸຍາດ ຜູ້ປະກອບການດ້ານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ;

2. ຄຸ້ມຄອງການຜະລິດ ແລະ ການນຳເຂົ້າ - ສົ່ງອອກ ຜະລິດຕະພັນດ້ານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ;

3. ຊີ້ນຳ, ຄຸ້ມຄອງ, ແນະນຳດ້ານວິຊາການ ແລະ ສົ່ງເສີມຂະບວນການເຄື່ອນໄຫວວັດທະນະທຳມະຫາຊົນ ເຊັ່ນ: ການສ້າງຄອບຄົວ ແລະ ບ້ານວັດທະນະທຳ, ສະໂມສອນ, ສູນວັດທະນະທຳເດັກ, ສວນສາທາລະນະ, ປ້າຍ, ສະຖານທີ່ບັນເທີງ, ເຮືອນພັກ, ໂຮງແຮມ, ຮ້ານອາຫານ, ສວນອາຫານ, ພິດທະພັນ, ສະຖານທີ່ທ່ອງທ່ຽວ, ການບໍລິການນຳທ່ຽວແບບແຜນການດຳລົງຊີວິດ, ຮີດຄອງປະເພນີ, ການເຮັດບຸນສິນກິນທານ ແລະ ງານພິທີກຳຕ່າງໆ ຂອງບັນດາເຜົ່າ ພາຍໃນແຂວງຈຳປາສັກ;

4. ຄົ້ນຄວ້າ, ກຳນົດແຜນຍຸດທະສາດການທ່ອງທ່ຽວ ພ້ອມທັງສ້າງເງື່ອນໄຂ ໃຫ້ມີການເຄື່ອນໄຫວຢ່າງເປັນປົກກະຕິ ແລະ ສອດຄ່ອງກັບທິດທາງຂອງຂັ້ນເທີງ;

5. ຄົ້ນຄວ້າຄຳຮ້ອງຂໍອະນຸຍາດອອກບັດ ຫຼື ຖອນບັດນັກຂ່າວ, ບັດນຳທ່ຽວ ຂອງພະນັກງານນຳທ່ຽວລະດັບຊາດ ແລະ ລະດັບທ້ອງຖິ່ນ ຕາມການແບ່ງຂັ້ນຄຸ້ມຄອງ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 39. ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບແຂວງ**

ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ດຳເນີນການກວດກາ ການເຄື່ອນໄຫວການສັນຈອນຂອງພາຫະນະ ຢ່າງເປັນປະຈຳ, ກ່າວເຕືອນ, ສັ່ງໂຈະ, ປັບໃໝ, ກັກລົດ ຫຼື ກັກໃບຂັບຂີ່ຕໍ່ຜູ້ລະເມີດ, ຮ້ອງຟ້ອງຕໍ່ອົງການທີ່ມີສິດອຳນາດ ເພື່ອດຳເນີນຄະດີຕໍ່ຜູ້ລະເມີດ ແລະ ການກະທຳຜິດຕໍ່ກົດໝາຍ ຫຼື ລະບຽບການ;

2. ຕິດຕາມ ການເຄົາລົບ ແລະ ການປະຕິບັດ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ - ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ຢ່າງເຂັ້ມງວດ ເພື່ອຮັບປະກັນຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ພາຍໃນຕົວເມືອງປາກເຊ;

3. ກວດກາ ຂໍ້ມູນຍານພາຫະນະ ກ່ອນການອະນຸຍາດໃຫ້ນຳໃຊ້;

4. ຄົ້ນຄວ້າ, ແກ້ໄຂຄະດີອຸປະຕິເຫດຕາມທ້ອງຖະໜົນ ພາຍໃນຕົວເມືອງປາກເຊ ຕາມກົດໝາຍ ແລະ ລະບຽບການ;

5. ປະສານສົມທົບ ກັບພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ອົງການພັດທະນາ ແລະ ບໍລິຫານຕົວເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ ເພື່ອປູກຈິດສຳນຶກໃຫ້ແກ່ປະຊາຊົນ ກ່ຽວກັບວຽກງານຄຸ້ມຄອງການສັນຈອນ ພາຍໃນຕົວເມືອງປາກເຊ;

6. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ການຈັດສັນຄວາມເປັນລະບຽບຮຽບຮ້ອຍພາຍໃນຕົວເມືອງປາກເຊ ໃຫ້ສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງ ຢ່າງເປັນປົກກະຕິ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 40. ສິດ ແລະ ໜ້າທີ່ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ**

ອົງການພັດທະນາ ແລະ ບໍລິຫານຕົວເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານສົມທົບ ກັບພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ ເພື່ອປຸກຈິດສຳນຶກໃຫ້ແກ່ປະຊາຊົນກ່ຽວກັບວຽກງານຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍພາຍໃນຕົວເມືອງປາກເຊ;

2. ຈັດສັນຄວາມເປັນລະບຽບຮຽບຮ້ອຍຕາມເສັ້ນທາງ, ສະຖານທີ່ສາທາລະນະຕ່າງໆ, ຄຸ້ມຄອງ, ປົກປັກຮັກສາສະຖານທີ່ສາທາລະນະ ໃຫ້ມີຄວາມສະອາດສວຍງາມ;

3. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍ ພາຍໃນຕົວເມືອງປາກເຊ ໃຫ້ສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງ ຢ່າງເປັນປົກກະຕິ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 41. ສິດ ແລະ ໜ້າທີ່ ຂອງພະແນກສຶກສາທິການ ແລະ ກິລາແຂວງ**

ພະແນກສຶກສາທິການ ແລະ ກິລາແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາອົບຮົມ ພະນັກງານ, ຄູອາຈານ, ນັກຮຽນ, ນັກສຶກສາ ເພື່ອປະຕິບັດຂໍ້ຕົກລົງສະບັບນີ້;

2. ຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນການເຂົ້າ - ອອກໂຮງຮຽນ ຂອງນັກຮຽນ ນັບທັງພາກລັດ ແລະ ເອກະຊົນ;

3. ປະສານສົມທົບກັບເຈົ້າໜ້າທີ່ຈໍລະຈອນ ເພື່ອຈັດຕັ້ງການໂຄສະນາ ເຜີຍແຜ່ກົດລະບຽບການສັນຈອນ ຕາມຫ້ອງຖະໜົນໃນຕົວເມືອງໃຫ້ທົ່ວເຖິງ;

4. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການສ້າງໂຮງຮຽນປອດສິ່ງເສບຕິດ ແລະ ໂຮງຮຽນສີຂຽວ;

5. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການປະຕິບັດລະບຽບການຄຸ້ມຄອງຮ້ານຫຼິ້ນເກມ, ໂຕະສະໜຸກເກີ, ຮ້ານກິນດື່ມ ເພື່ອສະກັດກັ້ນການເຂົ້າໃຊ້ບໍລິການຂອງນັກຮຽນ;

6. ສະຫຼຸບ, ຖອດຖອນບົດຮຽນ ຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ - ຈັດສັນຄວາມເປັນລະບຽບຮຽບຮ້ອຍ ພາຍໃນຂະແໜງການສຶກສາ ແລະ ກິລາ ພ້ອມທັງລາຍງານໃຫ້ຂັ້ນເທິງເປັນປົກກະຕິ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 42. ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ການຈັດຕັ້ງປະຕິບັດຂໍ້ກົດລະບຽບກ່ຽວກັບການຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍຂອງຕົວເມືອງ;

2. ຈັດຕັ້ງປະຕິບັດ ແລະ ເຂົ້າຮ່ວມໃນຂະບວນການ ພ້ອມທັງປຸກລະດົມປະຊາຊົນໃຫ້ເຂົ້າຮ່ວມໃນກິດຈະກຳ;

3. ຕິດຕາມ ກວດກາ ແລະ ສຶກສາອົບຮົມ, ກ່າວເຕືອນ ພ້ອມທັງສ້າງບົດບັນທຶກຕໍ່ກັບຜູ້ລະເມີດລະບຽບການ;

4. ສະຫຼຸບ ແລະ ລາຍງານສະພາບການ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ຂັ້ນເທິງທີ່ຖັດຕົນ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ

5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

## ໝວດທີ X
## ບັນດາຂໍ້ຫ້າມ

**ມາດຕາ 43. ຂໍ້ຫ້າມດ້ານການປຸກສ້າງ, ການນຳໃຊ້ທີ່ດິນ ແລະ ນຳໃຊ້ອາຄານ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີພຶດຕິກຳ ດັ່ງນີ້:

1. ຄຸ້ມຄອງ, ນຳໃຊ້ເນື້ອທີ່ດິນໃນຂອບເຂດສະຫງວນຂອງລັດ ຖ້າຕ້ອງການນຳໃຊ້ ຕ້ອງຂໍອະນຸຍາດນຳອົງການທີ່ກ່ຽວຂ້ອງເສຍກ່ອນ;

2. ປຸກສ້າງ, ສ້ອມແປງ, ຕໍ່ເຕີມ ກວມເອົາເຂດຂອງທາງ ຕາມການກຳນົດຂອງກົດໝາຍທາງຫຼວງ ແລະ ກົດລະບຽບຂອງແຜນຜັງຊີ້ນຳລວມຕົວເມືອງປາກເຊ;

3. ກໍ່ສ້າງ, ສ້ອມແປງ, ຕໍ່ເຕີມອາຄານ, ສຳນັກງານ, ເຮືອນຢູ່ອາໄສ, ເກາະເງິບ, ເທີບ, ປຸກຕູບ, ກໍ່ສ້າງຮົ້ວ, ຂຸດດິນຖົມດິນ ແລະ ອື່ນໆ ໃນເຂດສະຫງວນແຄມທາງໂດຍເດັດຂາດ;

4. ນຳໃຊ້ເສັ້ນທາງ, ປ່າທາງ ແລະ ເຂດສະຫງວນທາງ, ຈັດວາງ ຂາຍເຄື່ອງວັດສະດຸກໍ່ສ້າງ ແລະ ສິນຄ້າຕ່າງໆ ທີ່ມີຂະໜາດໃຫຍ່ລົ້ນອອກມາໃສ່ແຄມທາງ, ບ່ອນສ້ອມແປງລົດທຸກປະເພດ, ຕັ້ງໂຕະ, ວາງເຄື່ອງຂາຍ, ວາງເຄື່ອງບໍ່ໃຊ້, ຫຼີ້ນກິລາຕາມທາງ, ແຄມທາງ ແລະ ທາງຄົນຍ່າງ ເຂດຂອງທາງ ຂອງຕົວເມືອງໂດຍເດັດຂາດ. ຜູ້ປະກອບການຕ້ອງມີສາງຄ່ຽນຖ່າຍສິນຄ້າທີ່ມີເນື້ອທີ່ພຽງພໍ ຢູ່ເຂດນອກຕົວເມືອງ ເພື່ອເປັນບ່ອນຈຳໜ່າຍສິນຄ້າຈຳນວນຫຼາຍ ໃຫ້ແກ່ລູກຄ້າຂອງຕົນ;

5. ກໍ່ສ້າງ ຫຼື ຕໍ່ເຕີມອາຄານ, ສິ່ງປຸກສ້າງ, ການດຳເນີນກິດຈະການຕ່າງໆ ຢູ່ບ່ອນທາງໂຄ້ງ, ທາງແຄບ ຫຼື ແຄມທາງທີ່ບໍ່ມີບ່ອນຈອດລົດ, ປິດບັງມຸມມອງເຫັນ ຫຼື ທັດສະນະວິໄສຂອງການຂັບຂີ່ ຕາມມຸມທາງສາມແຍກ, ສີ່ແຍກ ທີ່ເປັນອັນຕະລາຍ ແລະ ສ່ຽງຕໍ່ການເກີດອຸປະຕິເຫດ;

6. ນຳໃຊ້ອາຄານ, ເຮືອນແຄມທາງ ເຮັດທຸລະກິດ - ການບໍລິການ ທີ່ບໍ່ມີບ່ອນຈອດລົດພຽງພໍ ຊຶ່ງເປັນເຫດໃຫ້ໄດ້ນຳໃຊ້ພື້ນທີ່ທາງເບຕົງໃນຕົວເມືອງ ແລະ ໃຈກາງຕົວເມືອງ ເກີດຄວາມແອອັດ ແລະ ກີດຂວາງການສັນຈອນ;

7. ປ່ອຍປະໃຫ້ໜ້າບ້ານ, ໜ້າເຮືອນ, ຮົ້ວບ້ານ, ສິ່ງປຸກສ້າງ, ຕົ້ນໄມ້ ແລະອື່ນໆ ຂອງເຈົ້າຂອງເຮືອນທີ່ບໍ່ມີຄົນຢູ່ປະຈຳ ຫຼື ຢູ່ປະຈຳ ເປິະເປື້ອນ, ຮົກເຮື້ອ, ບໍ່ຈົບງາມ. ຖ້າບໍ່ບົວລະບັດຮັກສາ ປົວແປງໃນໄລຍະເກີນ 3 ເດືອນ ພາຍຫຼັງກວດກາພົບເຫັນນັ້ນ, ພາກສ່ວນກ່ຽວຂ້ອງມີສິດແກ້ໄຂ ປັບປຸງສະເພາະໃນເຂດຂອງທາງ ເພື່ອໃຫ້ແລວເສັ້ນທາງມີຄວາມສະອາດສວຍງາມ ເຮັດໃຫ້ທິວທັດ, ທັດສະນະວິໄສການໃຊ້ລົດ ໃຊ້ຖະໜົນດີຂຶ້ນ;

8. ຕິດຕັ້ງປ້າຍໂຄສະນາ, ປ້າຍແນະນຳສິນຄ້າ, ການບໍລິການ ຫຼື ປ້າຍຊີ້ບອກໃສ່ໃນເຂດຫວງຫ້າມ, ໃສ່ບໍລິເວນທາງຄົນຍ່າງ ແລະ ຕົ້ນໄມ້ ທີ່ຊະຊາຍ ຕາມແຄມເສັ້ນທາງ ແລະ ໃນຕົວເມືອງ;

9. ເປີດການບໍລິການ ເກີນ 23 ໂມງ 30 ນາທີ, ນຳໃຊ້ສະຖານທີ່ດັ່ງກ່າວ ເປັນບ່ອນມົ້ວສຸມ, ອາລະວາດຕີກັນ ຫຼື ສວຍໂອກາດເຄື່ອນໄຫວທີ່ຜິດກັບລະບຽບການ, ສ້າງຄວາມເສື່ອມເສຍຕໍ່ຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງບ້ານເມືອງ;

10. ນັກຮຽນສາມັນ ຂັບຂີ່ລົດໃຫຍ່ໄປໂຮງຮຽນ, ຈອດພາຫະນະດັ່ງກ່າວຕາມແຄມທາງ ແລະ ທາງຄົນຍ່າງ, ອ້ອມແອ້ມບໍລິເວນໂຮງຮຽນ;

11. ຂາຍໂລງສົບ, ທາດ ຢູ່ແຄມທາງ ສະຖານທີ່ເປີດແປນ.

### ມາດຕາ 44. ຂໍ້ຫ້າມດ້ານການນຳໃຊ້ພື້ນຖານໂຄງລ່າງເຕັກນິກ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການຕໍ່ໄຟຟ້າ, ນໍ້າປະປາ, ໂທລະຄົມ, ສື່ສານ ເຂົ້າເຮືອນ, ອາຄານ, ສຳນັກງານອົງການ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ຢ່າງເດັດຂາດ;

2. ຝັງເສົາໄຟຟ້າ, ເສົາໂທລະຄົມມະນາຄົມສື່ສານ, ການດຶງສາຍຜ່ານຂ້າມທາງ, ອຸປະກອນປະກອບການຕິດຕັ້ງຕ່າງໆ ໃນເດີ່ນໂຮງຮຽນ, ເຂດສະໜາມບິນ, ເຂດທີ່ດິນທີ່ມີກຳມະສິດ ຫຼື ສະຖານທີ່ຫວງຫ້າມອື່ນໆ ຖ້າບໍ່ໄດ້ຮັບຄວາມເປັນເອກະພາບນຳເຈົ້າຂອງກຳມະສິດ;

3. ທຳລາຍວັດຖຸອຸປະກອນ, ອົງປະກອບຂອງເສົາໄຟຟ້າ, ດອກໄຟ, ລັກຕັດສາຍໄຟ ຫຼື ສາຍໂທລະສັບ, ເສົາສື່ສານໂທລະຄົມ, ຝາປິດຂຸມພັກນໍ້າ, ອຸປະກອນປະກອບຮ່ອງລະບາຍນໍ້າ ແລະອື່ນໆ ທີ່ເປັນອົງປະກອບຂອງເສັ້ນທາງ;

4. ທຳລາຍ, ຍັບຍ້າຍ, ທຸບມ້າງ, ສ້າງຄວາມເປິະເປື້ອນດອນກາງທາງ, ປ້ອກັນຮາວກັ້ນ, ຂອບພື້ນໂຕໜອນ, ພື້ນໂຕໜອນທາງຍ່າງ, ດອກໄມ້ປະດັບ, ຢຽບສວນຫຍ້າ, ສວນຫຍ້າແຄມທາງ, ບ່ອນນັ່ງລໍຖ້າລົດເມ, ຂອບທາງ, ກົບບົວຂອບວົງວຽນ ແລະ ອຸປະກອນກ່ຽວຂ້ອງ ໂດຍເດັດຂາດ;

5. ຮ້ານເກັບຊື້ເຄື່ອງຂອງເກົ່າ ຊື້ວັດສະດຸທີ່ເປັນຂອງລັດ, ຊັບສິນຂອງສາທາລະນະ ເຊັ່ນ: ຝາຮ່ອງລະບາຍນໍ້າ, ຕະແກ້ງຮ່ອງກ້າງປາ, ເຫຼັກຍຶດ, ເຫຼັກໂຄງສ້າງເສົາໄຟຟ້າ, ສາຍໄຟຟ້າທີ່ຖືກລັກຕັດ, ເສົາໂທລະຄົມ ສື່ສານຕ່າງໆ, ຖ້າພົບເຫັນໃຫ້ແຈ້ງການຈັດຕັ້ງທີ່ກ່ຽວຂ້ອງ, ຖ້າພົບເຫັນຢູ່ນໍາພາກສ່ວນໃດ ຕ້ອງໄດ້ດໍາເນີນຄະດີຕາມລະບຽບກົດໝາຍ;

6. ປຸກສ້າງ, ກໍ່ສ້າງ, ຕິດຕັ້ງ, ຂຸດດິນ, ຖົມດິນ ສິ່ງປຸກສ້າງທີ່ມີລັກສະນະກີດຂວາງ, ອັດຕັນ, ໃກ້ລະບົບລະບາຍນໍ້າ, ອ່າງພັກນໍ້າ, ເຮືອນຈັກໂປມນໍ້າ, ປະຕູນໍ້າ, ຄອງລະບາຍນໍ້າທໍາມະຊາດ ແລະ ກໍ່ສ້າງໃໝ່, ບ່ອນບໍາບັດນໍ້າເສຍຂອງຕົວເມືອງ ແລະ ບໍ່ລໍ້າເຂົ້າໄປໃນເຂດສະຫງວນດັ່ງກ່າວທີ່ກໍານົດໄວ້. ຖ້າມີຄວາມຈໍາເປັນໃນບາງກໍລະນີ ແມ່ນໃຫ້ນໍາສະເໜີພາກສ່ວນກ່ຽວຂ້ອງກວດກາ ພິຈາລະນາເສຍກ່ອນ;

7. ປຸກສ້າງ, ກໍ່ສ້າງ, ຕິດຕັ້ງສິ່ງປຸກສ້າງ ທີ່ມີລັກສະນະກີດຂວາງ, ທ່ອງດຶງ, ການປະກອບຕິດຕັ້ງ, ເກາະຫ້ອຍສິ່ງຂອງ, ໂຄງສ້າງ, ວັດຖຸອື່ນໆໃສ່ຂົວ, ທ່າບົກ - ທ່າເຮືອ, ກັນເຈື່ອນ, ຄູກັ້ນນໍ້າ, ຫຼັກຫຼາແທກນໍ້າ ແລະ ສິ່ງປຸກສ້າງທາງນໍ້າ ກ່ອນໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

8. ບຸກລຸກ, ນໍາໃຊ້ສະໜາມຂີ້ເຫຍື້ອ, ສະຖານີຄ່ຽນຖ່າຍຂີ້ເຫຍື້ອ, ລະບົບອຸປະກອນ, ພາຫານະ, ສິ່ງອໍານວຍຄວາມສະດວກ ການເກັບຂົນສິ່ງຂີ້ເຫຍື້ອ ເພື່ອເຮັດກິດຈະການອື່ນ ທີ່ຂັດກັບກິດຈະການດັ່ງກ່າວ ຢ່າງເດັດຂາດ;

9. ບຸກລຸກ, ທໍາລາຍ, ສ້າງຄວາມເສຍຫາຍຕໍ່ວົງວຽນ, ຂັບໂມງ, ຫຸ່ນຈໍາລອງວັດພູ, ນໍ້າພຸ, ປ່າຊ່າ, ປ້າຍເສັ້ນທາງ, ປ້າຍກວມທາງ, ປ້າຍຊື່ຖະໜົນ, ປ້າຍຮ່ອມທາງແຍກ, ລະບົບອຸປະກອນປະກອບນັ້ນ ຢ່າງເດັດຂາດ.

**ມາດຕາ 45. ຂໍ້ຫ້າມດ້ານການຂົນສົ່ງ, ການໃຊ້ເສັ້ນທາງ ແລະ ການສັນຈອນ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີພຶດຕິກໍາ ດັ່ງນີ້:

1. ຂັບລົດຜິດຈາກເລນຂັບຂີ່ທີ່ກໍານົດໄວ້ ລວມທັງແຊງຕັດໜ້າ, ຊ້າຍ ແລະ ຂວາ ດ້ວຍຄວາມໄວເກີນຄວນ ເຊິ່ງຖືວ່າແມ່ນການຂາດມາລະຍາດໃນການຂັບຂີ່ ແລະ ບໍ່ມີຄວາມປອດໄພ ຊຶ່ງເຈົ້າໜ້າທີ່ມີສິດເອົາມາຕັກເຕືອນ ຫຼື ດໍາເນີນຄະດີຕາມກົດໝາຍ;

2. ເດັກນ້ອຍ, ຜູ້ເຖົ້າ, ຄົນພິການ (ຄວາມສາມາດຕໍ່າ) ຂ້າມທາງ, ຫຼິ້ນຢູ່ຕາມແຄມທາງຍ່າງ, ຂີ່ລົດຖີບໂດຍລໍາພັງ;

3. ປ່ອຍສັດ, ລ້ຽງສັດ ຕາມເສັ້ນທາງ, ສະຖານທີ່ສາທາລະນະ ໃນຕົວເມືອງ, ໂດຍບໍ່ມີຜູ້ຄວບຄຸມ;

4. ອັດທາງບາງສ່ວນ ຫຼື ທັງໝົດຂອງຄອບຄົວຜູ້ຈັດງານຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ. ກໍລະນີໄດ້ຮັບອະນຸຍາດແລ້ວ ຄວນມີປ້າຍບອກເຕືອນໃຫ້ຊັດເຈນ ເພື່ອອໍານວຍຄວາມສະດວກໃຫ້ຜູ້ຂັບຂີ່ສາມາດເວັ້ນໄປທາງອື່ນໄດ້;

5. ຂັບຂີ່ລົດບໍ່ມີປ້າຍທະບຽນ, ດັດແປງສະພາບເຕັກນິກພາຫະນະ ແລະ ຂັບຂີ່ແຂ່ງລົດກັນຕາມເສັ້ນທາງ, ດື່ມສິ່ງມຶນເມົາແລ້ວຂັບຂີ່ຍານພາຫະນະ, ຂັບຂີ່ລົດຈັກທຸກຊະນິດຮຽງກັນເກີນ 2 ຄັນຂຶ້ນໄປ ແລະ ລົມທະນາກັນ, ຢອກກັນ ໃນເວລາຂັບຂີ່ລົດຈັກ;

6. ລົດຈັກບັນທຸກເຄື່ອງຂອງ, ສິນຄ້າ, ເຄື່ອງໃຊ້ ແລະ ເກາະຫ້ອຍເຄື່ອງດັ່ງກ່າວ ກີດຂວາງ ຫຼື ເກີນຂະໜາດບັນທຸກ ເຮັດໃຫ້ຂາດຄວາມຄ່ອງຕົວ ໃນການຂັບຂີ່ ເຊິ່ງອາດກໍ່ໃຫ້ເກີດອຸປະຕິເຫດໄດ້;

7. ລົດທຸກປະເພດຈອດລໍ, ຈອດລົດເອົາຜູ້ໂດຍສານຢູ່ທາງສາມແຍກ, ສີ່ແຍກ, ບ່ອນມີໄຟອຳນາດ ແລະ ບໍ່ມີໄຟອຳນາດ ເກີນເສັ້ນມ້າລາຍທີ່ກຳນົດໄວ້ ແລະ ຈອດລໍເກີນອອກມາ ຈົນກີດຂວາງລົດທີ່ມາຈາກທິດທາງຂວາມືຂອງຕົນຈະລໍຈອ;

8. ລົດບັນທຸກສິນຄ້າ ແລະ ໂດຍສານ ບັນທຸກເຄື່ອງຂອງສິນຄ້າ ແລະ ຜູ້ໂດຍສານເກີນກຳນົດຂອງລົດ ແຕ່ລະປະເພດ ຕາມລະບຽບການຂອງພາກສ່ວນກ່ຽວຂ້ອງໄດ້ກຳນົດໄວ້ ເຊັ່ນ: ດ້ານນ້ຳໜັກ, ລວງຍາວ, ລວງກວ້າງ ແລະ ລວງສູງ ສຳລັບລົດໂດຍສານ ຫຼື ລົດປະຕິບັດວຽກງານໃດໜຶ່ງ ແມ່ນຫ້າມບໍ່ໃຫ້ຜູ້ໂດຍສານແຂວນຫ້ອຍ ຫຼື ຂຶ້ນເທິງຫຼັງຄາ;

9. ບັນດານັກຂັບຂີ່, ຜູ້ໂດຍສານ, ຜູ້ນຳໃຊ້ພາຫະນະທຸກປະເພດ ປະປ່ອຍໃຫ້ສິ່ງຂອງຕົກເຮ່ຍຊະຊາຍລົງສູ່ຖະໜົນຫົນທາງ, ແຫຼ່ງນ້ຳ ແລະ ສະຖານທີ່ສາທາລະນະອື່ນໆ ຢ່າງເດັດຂາດ ໂດຍສະເພາະລົດຂົນສິ່ງແຮ່, ຊາຍ, ດິນ;

10. ເດັກນ້ອຍອາຍຸບໍ່ເຖິງ 15 ປີ ຂັບຂີ່ລົດຈັກ, ບໍ່ເຖິງ 18 ປີ ຂັບຂີ່ລົດໃຫຍ່;

11. ຈອດລົດທີ່ມາໃຊ້ບໍລິການ ສະຖານທີ່ບໍລິການ ແລະ ທຸລະກິດ, ຄ້າຂາຍ ເກີນ 15 ນາທີຂຶ້ນໄປ.

### ມາດຕາ 46. ຂໍ້ຫ້າມດ້ານສິ່ງແວດລ້ອມ ແລະ ການອະນາໄມ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຈູດ, ຖອກ ຫຼື ຖິ້ມຂີ້ເຫຍື້ອ, ສິ່ງເສດເຫຼືອ ແລະ ວັດສະດຸກໍ່ສ້າງຕ່າງໆ ຕາມລຳພັງໃຈ;

2. ຖິ້ມຊາກສັດ ລວມທັງນ້ຳມັນຫຼໍ່ລື່ນທີ່ໃຊ້ແລ້ວ, ທາດແຫຼວທີ່ເປັນພິດ ແລະ ສານເຄມີ, ເສດວັດສະດຸກໍ່ສ້າງ ລົງໃສ່ເສັ້ນທາງ ຫຼື ແຄມທາງ, ຕະຄອງ - ຮ່ອງນ້ຳ, ແມ່ນ້ຳຂອງ, ນ້ຳເຊ, ຄອງຊົນລະປະທານ, ຄອງລະບາຍນ້ຳ, ຫ້ວຍ, ຮ່ອງ ແລະ ໜອງນ້ຳ ໂດຍເດັດຂາດ. ການກະທຳດັ່ງກ່າວຈະກໍ່ໃຫ້ເກີດກິ່ນເນົ່າເໝັນ ເປັນມົນລະພິດຕໍ່ບ້ານເຮືອນ, ຊຸມຊົນ, ທີ່ສາທາລະນະ ແລະ ເຂດທຳມະຊາດ ຂອງຕົວເມືອງ;

3. ຕັດຮອນ ຫຼື ທຳລາຍຕົ້ນໄມ້ແຄມທາງ ຫຼື ໃນເຂດສວນສາທາລະນະປ່າສະຫງວນ ໃນຂອບເຂດຕົວເມືອງປາກເຊ. ໃນກໍລະນີມີຄວາມຈຳເປັນຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນ;

4. ຂຸດດິນ, ຖົມດິນໃສ່ແຫຼ່ງນ້ຳ, ທາງນ້ຳໄຫຼ, ດິນພູ, ດິນປ່າໄມ້ ໃນເຂດຕົວເມືອງປາກເຊ, ຖ້າຈຳເປັນຕ້ອງໄດ້ຂໍອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງເສຍກ່ອນ;

5. ເຜົາຖ່ານ, ເຜົາດິນຈີ່, ຈູດເຜົາຂີ້ເຫຍື້ອ ແລະ ສິ່ງເສດເຫຼືອຢ່າງຊະຊາຍ ແລະ ການເຜົາໄໝ້ອື່ນໆ ໃນຂອບເຂດຂອງຕົວເມືອງປາກເຊ ໂດຍບໍ່ໄດ້ຮັບອະນຸຍາດ.

6. ລົດທຸກຊະນິດ ເປີດເຄື່ອງສຽງດັງ ແລ່ນຕາມທ້ອງຖະໜົນ.

**ມາດຕາ 47. ຂໍ້ຫ້າມດ້ານຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະຫງົບສຸກ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີພຶດຕິກຳ ດັ່ງນີ້:

1. ສົມຮູ້ຮ່ວມຄິດ, ປົກປິດ, ເຊື່ອງອຳ, ໃຫ້ທີ່ພັກເຊົາ, ຍົກຍ້າຍ ຫຼື ອະນຸຍາດໃຫ້ແກ່ຄົນລາວ, ຊາວຕ່າງດ້າວ ຫຼື ຊາວຕ່າງປະເທດ ທີ່ບໍ່ມີເອກະສານຢັ້ງຢືນຢ່າງຖືກຕ້ອງ ເຊັ່ນ: ບັດປະຈຳຕົວ, ປື້ມສຳມະໂນຄົວ ຫຼື ບັດຜ່ານແດນ ຖ້າພົບເຫັນຕ້ອງແຈ້ງ ຫຼື ລາຍງານແກ່ຫົວໜ້າຄອບຄົວ, ນາຍບ້ານ ຫຼື ເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອຮັບປະກັນຄວາມປອດໄພ ໃຫ້ແກ່ບຸກຄົນດັ່ງກ່າວ ທັງຮັບປະກັນຄວາມສະຫງົບຂອງບ້ານເມືອງອີກດ້ວຍ;

2. ເຄື່ອນໄຫວ ຫຼິ້ນການພະນັນທີ່ຕ້ອງຫ້າມ, ເປັນນັກເລງອັນທະພານ, ສ້າງເປັນກຸ່ມແກ໊ງ, ຂີ້ລັກງັດແງະ, ມົ້ວສຸມກັບສິ່ງເສບຕິດທຸກປະເພດ ທີ່ສົ່ງຜົນສະທ້ອນອັນບໍ່ດີຕໍ່ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

3. ອົງການກ່ຽວຂ້ອງອອກໃບອະນຸຍາດປະເພດຮ້ານບັນເທີງ, ຮ້ານເກມວີດີໂອ, ເກມຄອມພິວເຕີ, ຄາຣາໂອເກະ, ໂຕະສະໜຸກເກີ, ເດີ່ນໝາກບຸນ ແລະ ອື່ນໆ ທີ່ບໍ່ໄດ້ມາດຕະຖານທຸລະກິດ, ມີທີ່ຕັ້ງໃກ້ສະຖານທີ່ສຶກສາ, ສະຖານທີ່ເຄົາລົບບູຊາ, ສະຖານທີ່ສຳຄັນລະດັບຊາດ ແລະ ອື່ນໆ ທີ່ບໍ່ເໝາະສົມ, ສ້າງສິ່ງລົບກວນລຳຄານ, ມີຄວາມສ່ຽງເກີດປະກົດການຫຍໍ້ທໍ້, ທຳລາຍສະພາບແວດລ້ອມທາງສຽງ ແລະ ບັນຍາກາດ ທາງສັງຄົມ;

4. ຕາກເຄື່ອງນຸ່ງຫົ່ມ ແລະ ປະເຄື່ອງຊະຊາຍ ຕາມລະບຽງ, ຮົ້ວ, ໜ້າເຮືອນ, ເຮືອນພັກ, ໂຮງແຮມ, ໂຮງໝໍ, ໂຮງຮຽນ, ສຳນັກງານອົງການ ທີ່ຕັ້ງຢູ່ສອງຟາກທາງຫຼວງແຫ່ງຊາດ ແລະ ເສັ້ນທາງຕ່າງໆ ຢ່າງເດັດຂາດ.

## ໝວດທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 48. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານປະກອບສ່ວນເຂົ້າໃນ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຢ່າງດີ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍຕ່າງໆ ຕາມຄວາມເໝາະສົມ.

**ມາດຕາ 49. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ກຳນົດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

**ມາດຕາ 50. ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ກຳນົດສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝຕາມກໍລະນີ ດັ່ງນີ້:

1. ຜູ້ທີ່ປ່ອຍຄວາຍ, ງົວ, ມ້າ, ໝູ, ແບ້ ພາຍຫຼັງກ່າວເຕືອນ ແລະ ສ້າງບົດບັນທຶກການສຶກສາອົບຮົມແລ້ວ ຈະຖືກປັບໃໝ ຂັ້ນຕົ້ນ:

- ຄວາຍ, ງົວ, ມ້າ ເປັນມູນຄ່າ 300.000 ກີບ/ໂຕ/ຄັ້ງ;
- ໝູ, ແບ້ ເປັນມູນຄ່າ 150.000 ກີບ/ໂຕ/ຄັ້ງ.

ການປັບໃໝໃນຄັ້ງທີສອງ ແມ່ນຄິດໄລ່ເປັນຈຳນວນ ສອງ ເທົ່າຕົວ ຂອງຄັ້ງຜ່ານມາ ແລະ ຖ້າລະເມີດອີກ ໃຫ້ຮິບເປັນຂອງລັດ.

2. ການຄ້າ - ຂາຍສິນຄ້າ ທີ່ລະເມີດລະບຽບການຄຸ້ມຄອງການຄ້າ ຈະຖືກປັບໃໝ ດັ່ງນີ້:

❖ ປຸກສ້າງ ຫຼື ຕໍ່ເຕີມຮ້ານຄ້າ ຫຼື ຈັດວາງສິນຄ້າເກີນໜ້າຮ້ານ ເຂົ້າກວມເອົາເຂດທາງຍ່າງ (ປ່າທາງ) ຈະຖືກປັບໃໝ 2 ເທົ່າຂອງມູນຄ່າເຊົ່າທີ່ດິນລັດ.

❖ ບໍລິສັດຂາອອກ - ຂາເຂົ້າ ຫຼື ທຸລະກິດນຳເຂົ້າສິນຄ້າ ບໍ່ສ້າງຕັ້ງລະບົບສາງ ຫຼື ບ່ອນຄ່ຽນຖ່າຍສິນຄ້າ ຈະຖືກປະຕິບັດ ດັ່ງນີ້:

- ສຶກສາອົບຮົມກ່າວເຕືອນ;
- ໂຈະການນຳເຂົ້າສິນຄ້າຊົ່ວຄາວ;
- ຖອນໃບອະນຸຍາດດຳເນີນທຸລະກິດ.

3. ຈອດລົດບ່ອນທີ່ທາງການຫ້າມຈອດ ເຊັ່ນ: ແຄມທາງ, ປ່າທາງ, ທາງຄົນຍ່າງ, ປ້າຍຫ້າມ, ຂີດໝາຍຈາລະຈອນທີ່ຫ້າມຈອດ ຕາມເສັ້ນທາງຫຼວງ ຈະຖືກປະຕິບັດ ດັ່ງນີ້:

❖ ເຈົ້າໜ້າທີ່ຈະລ໋ອກລໍ້ລົດໄວ້

- ລົດຈັກ, ລົດສາມລໍ້, ລໍ້ຍູ້ 50.000 ກີບ/ຄັ້ງ;
- ລົດເບົາ, ເກັງ, ກະບະ, ຈິບ, ລົດຕູ້ 70.000 ກີບ/ຄັ້ງ;
- ລົດຕຸກງ, ລົດໂດຍສານ 4 ລໍ້ 100.000 ກີບ/ຄັ້ງ;
- ລົດບັນທຸກ 6 ລໍ້ 150.000 ກີບ/ຄັ້ງ;
- ລົດບັນທຸກ 10 ລໍ້ຂຶ້ນໄປ, ລົດໂດຍສານ (ລົດບັດ) 250.000 ກີບ/ຄັ້ງ.

❖ ລົດບັນທຸກທົ່ວໄປ, ລົດໂດຍສານ (ລົດບັດ) ຈອດເອົາຜູ້ໂດຍສານ, ຂຶ້ນເຄື່ອງ ຫຼື ລົງເຄື່ອງ ຕາມເສັ້ນທາງຫຼວງ ໃນຂອບເຂດຕົວເມືອງປາກເຊ ເຮັດໃຫ້ເສັ້ນທາງແອອັດ ແລະ ກີດຂວາງການສັນຈອນ ຈະຖືກປະຕິບັດ ດັ່ງນີ້:

- ສຶກສາອົບຮົບກ່າວເຕືອນ;
- ປັບໃໝ 250.000 ກີບ/ຄັ້ງ;
- ຖອນໃບອະນຸຍາດດຳເນີນກິດຈະການ.

❖ ລົດຕໍ່ອກງທີ່ຈອດ ແລະ ແລ່ນຕາມເສັ້ນທາງຫຼວງ ໃນຂອບເຂດຕົວເມືອງປາກເຊ ເຊິ່ງເຮັດໃຫ້ເສັ້ນທາງແອອັດ ແລະ ກີດຂວາງການສັນຈອນ ຈະຖືກປະຕິບັດ ດັ່ງນີ້:

- ສຶກສາອົບຮົບກ່າວເຕືອນ;
- ປັບໃໝ 100.000 ກີບ/ຄັ້ງ.

4. ບໍ່ໃສ່ໝວກກັນກະທົບ, ຂັບຂີ່ລົດໄວເກີນກຳນົດ, ຂັບຂີ່ລົດແຂ່ງກັນ, ລະເມີດປ້າຍຈະລາຈອນ, ຂັບລົດຕຳສິ່ງສາທາລະນະປະໂຫຍດ, ກໍ່ສ້າງ ແລະ ສ້ອມແປງ ໂດຍບໍ່ຮັກສາຄວາມປອດໄພຂອງການສັນຈອນ, ຫຸ້ມຫໍ່ບໍ່ແໜ້ນໜາ, ສ້າງຄວາມເປິະເປື້ອນ ໃຫ້ຕົວເມືອງ ແລະ ເຮັດໃຫ້ອາກາດໃນຕົວເມືອງເປັນພິດ, ປະເພດ

ລົດໂດຍສານ ແລະ ລົດຂົນສົ່ງສິນຄ້າ ຈອດບໍ່ຖືກບ່ອນກຳນົດ, ລົດຂົນສົ່ງແລ່ນບໍ່ຖືກເສັ້ນທາງອະນຸຍາດໃນຕົວເມືອງ ຈະຖືກປັບໃໝແຕ່ 10.000 ກີບ ຫາ 300.000 ກີບ.

5. ເຈົ້າໜ້າທີ່ມີສິດກັກພາຫະນະທຸກປະເພດ ແລະ ສັດລ້ຽງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ຢ່າງຮ້າຍແຮງ, ເຈົ້າຂອງພາຫະນະ ແລະ ສັດ ຕ້ອງໄດ້ເສຍຄ່າປົກປັກຮັກສາຈົນກວ່າຄະດີຈະສຳເລັດ ດັ່ງນີ້:

- ປະເພດໝູ, ແບ້ 20.000 ກີບ/ໂຕ/ວັນ, ຄ່າອາຫານສັດ 10.000 ກີບ/ໂຕ/ວັນ;
- ປະເພດງົວ, ຄວາຍ, ມ້າ 20.000 ກີບ/ໂຕ/ວັນ, ຄ່າລ້ຽງດູ ແລະ ອາຫານສັດ 30.000 ກີບ/ໂຕ/ວັນ;
- ລົດຖີບ, ລໍ້ຊຸກ 2.000 ກີບ/ຄັນ/ວັນ;
- ລົດຈັກ, ສາມລໍ້ເຄື່ອງ 3.000 ກີບ/ຄັນ/ວັນ;
- ລົດໄຖນາເດີນຕາມ, ລົດຕ່ອກໆ 4.000 ກີບ/ຄັນ/ວັນ;
- ລົດຕຸກໆ, ລົດເບົາ, ລົດເກັ່ງ, ລົດກະບະ, ລົດຕູ້ 6.000 ກີບ/ຄັນ/ວັນ;
- ລົດບັນທຸກ 6 ລໍ້, ລົດໂດຍສານ 15 – 30 ບ່ອນນັ່ງ 10.000 ກີບ/ຄັນ/ວັນ;
- ລົດ 10 ລໍ້ຂຶ້ນໄປ ແລະ ລົດໂດຍສານຫຼາຍກວ່າ 30 ບ່ອນນັ່ງ 15.000 ກີບ/ຄັນ/ວັນ;
- ກົນຈັກໜັກ 20.000 ກີບ/ຄັນ/ວັນ.

ໄລຍະພວມດຳເນີນຄະດີ ເຈົ້າໜ້າທີ່ຕ້ອງປົກປັກຮັກສາພາຫະນະ ແລະ ສັດ ໄວ້ໃຫ້ດີ, ຫ້າມເຈົ້າໜ້າທີ່ນຳໄປໃຊ້ ຫາກເຈົ້າໜ້າທີ່ຜູ້ໃດລະເມີດຈະຖືກລົງວິໄນ ແລະ ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ.

6. ໃຫ້ທີ່ພັກເຊົາທີ່ບໍ່ຖືກຕ້ອງ ຈະຖືກປັບໃໝ ດັ່ງນີ້:

- ຜູ້ໃຫ້ພັກເຊົາ ປັບໃໝ 200.000 ກີບ/ຄົນ/ຄັ້ງ;
- ຜູ້ພັກເຊົາ ປັບໃໝ 100.000 ກີບ/ຄົນ/ຄັ້ງ.

**ມາດຕາ 51. ການຄຸ້ມຄອງເງິນທີ່ໄດ້ຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝທັງໝົດ ໃຫ້ປະຕິບັດ ດັ່ງນີ້:

- 40% ມອບເຂົ້າງົບປະມານແຫ່ງລັດ;
- 30% ມອບເຂົ້າເປັນເງິນບໍລິຫານ, ອັດຕາກິນ ຂອງຜູ້ເຂົ້າຮ່ວມ ແລະ ຜູ້ປະຕິບັດວຽກງານຕົວຈິງ;
- 20% ມອບເຂົ້າຄັງສະສົມໜ່ວຍງານສະເພາະກິດ;
- 10% ມອບເຂົ້າຄັງສະສົມໜ່ວຍງານກູ້ໄພ.

## ໝວດທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 52. ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການປົກຄອງເມືອງປາກເຊ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງ.

**ມາດຕາ 53. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງສິບຫ້າວັນ ນັບແຕ່ວັນລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ. ຂໍ້ຕົກລົງສະບັບອື່ນທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ເຈົ້າແຂວງ

ປອ. ບຸນທອງ ດີວີໄຊ